# ວັຈນານຸກົມ ພາສາລາວ

ໂດຍ ມະຫາ ສີລາ ວີຣະວົງສ໌

ສະບັບປັບປຸງໃໝ່

ພ.ສ. 2549

ດອກເກດ
DokkeD

ດອກເກດ ຈັດພິມ ຈຳກັດ
Dokked Publishing Co., Ltd

ບຸນເສີ່ງ ແກ້ວປົວສາຍ

*ວັຈນານຸກົມ ພາສາລາວ ຂອງ ຄນະກັມມະການວັນນະຄະດີ*

*ພຸທສັກຣາດ 2503 ( ປີ 1960)*

*ຂຽນໂດຍ ມະຫາສິລາ ວີຣະວົງສ໌ ເລຂານຸການກັມມະການວັນນະຄະດີ*

*ພິມທີ່ ໂຮງພິມ ກອງແບບຮຽນ ແຫ່ງກະຊວງສຶກສາ*

*ເທື່ອທີ 1 ຈຳນວນ 500 ສະບັບ, ຄັ້ງທີ 2 ຈຳນວນ 3000, ພ.ສ. 2505*

*ຈັດພິມໂດຍ ກະຊວງສຶກສາທິການ ອະດີດພຣະຣາຊອານາຈັກລາວ*

LAO DICTIONARY
complided by Maha Sila Viravongs.
Frist published by Ministry of Education of the Kingdom of Laos, 500 copies,
2nd edition, 3000 copies, 1962

ພິມເທື່ອທີ 3, ເພື່ອເປັນ ເອກະສານຄົ້ນຄວ້າ

ຄະນະຮັບຜິດຊອບການຈັດພິມ: ດາຣາ ວີຣະວົງສ໌

ກັນລະຍາ, ດວງເດືອນ ບຸນຍາວົງ

ທີ່ເປັກສາພິເສດ: ມະຫາບຸນຍົກ ແສນສູນທອນ

ພິສູດອັກສອນ: ອິນຂຽນ ເດຊວົງສາ

ອອກແບບປົກ ແລະຈັດໜ້າ ໂດຍ:

ບໍລິສັດ ດອກເກດ ການພິມ ຈຳກັດຜູ້ດຽວ.

ຈັດຈຳໜ່າຍ ໂດຍ ບໍລິສັດ ດອກເກດການພິມ

ຈຳກັດຜູ້ດຽວ, ເລກທີ 068, ຖະໜົນ

ຫລວງພະບາງ, ສີຖານເໜືອ, ນະຄອນຫລວງວຽງຈັນ.

ຕິດຕໍ່ ໂທ/ແຟກ: (+856-21 263748)

e-mail:dokked@veetoo.net

ພິມທີ່: ຈຳປາ ການພິມ

ຕາມ ລທບ: 116 ພຈ 29062006, ຈຳນວນ

LAO DICTIONARY
by Maha Sila Viravongs
Revised edition, 2006
Sponsored by ALC , THE TOYOTA FOUNDATION, Mr. Viraphon Viravong Ms. Chantason Inthavong, Mr. Virasene Viravong, MARUYAMA Co., LTD.

Publish and Distribute by
Dokked Publishing Co., Ltd.
068 Luangprabang Rd, Sithan Neu,
P.O.Box 230, Vientiane, Lao PDR.
tel:fax: (+856-21) 26-3748
e-mail:dokked@veetoo.net

ອຸປະຖຳການພິມ ໂດຍ

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) TOYOTA FOUNDATION MARUYAMA Co., LTD.

ທ່ານ ວີຣະພົນ ວີຣະວົງສ໌, ນາງ ຈັນທະສອນ ອິນທະວົງ, ວີຣະເສນ ວີຣະວົງສ໌.

# ວັຈນານຸກົມ
# ພາສາລາວ

ໂດຍ ມະຫາ ສີລາ ວີຣະວົງສ໌

ບຸນ[illegible] ແກ້ວບົວສາຍ

ສະບັບປັບປຸງໃໝ່

ພ.ສ. 2549

ບຸນ[illegible] ແກ້ວບົວສາຍ

# ຄຳອະທິບາຍ ຂອງຄະນະຈັດພິມ

ປື້ມວັດຈະນານຸກົມຂອງ ທ່ານມະຫາສິລາ ວີຣະວົງສ໌ ທີ່ຈັດພິມໂດຍ ກະຊວງ ສຶກສາທິການ ສະໄໝເປັນຣາຊະອານາຈັກເມື່ອປີ ພ. ສ. 2503 (ຄ.ສ.1960) ຈຳນວນ 500 ເຫລັ້ມ ແລະ ພິມຄັ້ງທີສອງຈຳນວນ 3000 ເຫລັ້ມ ພ.ສ. 2505 ນັບມາເຖິງປັດຈຸບັນ ກໍເປັນເວລາເກືອບເຄິ່ງສະຕະວັດ (ສີ່ສິບ ຫົກປີ) ແລ້ວ ພາສາລາວ ຫລັກການຂຽນຄຳສັບ ໂດຍທົ່ວໄປມີການຜັນປ່ຽນປັບແປງໄປຕາມການພັດທະນາຂອງປະເທດຊາດ ຢ່າງໃດກໍດີ ຄວາມຮຽກຮ້ອງຕ້ອງການຂອງການຄົ້ນຄວ້າ ດ້ານພາສາ ອັກສອນສາດ ບັງຄັບໃຫ້ນັກຄົ້ນຄວ້າບໍ່ວ່າຮຸ່ນໃດ ກໍຢາກມີເອກະສານເກົ່າແກ່ທຸກໆຢ່າງໄວ້ ເປັນບ່ອນອ້າງອີງສະເໝີ ວັດຈະນານຸກົມສະບັບເດີມຂອງ ທ່ານມະຫາສິລາ ວີຣະວົງສ໌ ສະບັບນີ້ ເຖິງມີອາຍຸດົນນານແລ້ວ ແຕ່ກໍມີຂໍ້ມູນຫນັກແຫນ້ນ ດ້ານຮາກຄຳ ປະຫວັດຂອງຄຳ ແລະ ທີ່ມາຂອງຄຳ ໂດຍບອກແຫລ່ງເອກະສານບ່ອນທີ່ຄຳໆນັ້ນປາກົດຢູ່ໃຫ້ຮູ້ຢ່າງແນ່ນອນ ເຊັ່ນ ເກ (ຄຳງ່າຍໆ) ເຊິ່ງນອກຈາກ ໃຫ້ຄຳອະທິບາຍແລ້ວຍັງຍົກບົດກອນມາປະກອບ: "ກູນີ້ ມີໃຊ່ສາມານເຊື້ອ ຍິງເກກາງກາດ" ຈາກເຣື່ອງ "ສັງສິນໄຊ" ດັ່ງນີ້ເປັນຕົ້ນ ແລະຈະເປັນແບບນີ້ສະເໝີ ສິ່ງນີ້ ດ້ານນຶ່ງກໍສະແດງໃຫ້ເຫັນ ເຖິງອັດສະຣິຍະ ໃນການຈື່ຈຳວັນນະຄະດີກາບກອນລາວບູຮານ ຂອງທ່ານ ມະຫາສິລາ ແລະອັນທີສອງກໍເປັນການຢັ້ງຢືນສ້າງຄວາມເຊື່ອຫມັ້ນໃຫ້ແກ່ຜູ້ຊົມໃຊ້ປື້ມມາຕະຫລອດເວລາອັນຍາວນານ ສ່ວນສຳນວນການຂຽນຄຳອະທິບາຍສຳລັບແຕ່ລະສັບ ກໍຖືວ່າເປັນແບບເປັນຢ່າງ ທາງດ້ານສ້າງປະໂຫຍກສັ້ນໆຈະແຈ້ງແນ່ນອນ.

ຈຸດພິເສດອີກອັນນຶ່ງທີ່ພວກເຮົາໄດ້ຈາກການນຳໃຊ້ປື້ມວັດຈະນານຸກົມຂອງທ່ານກໍແມ່ນ ບໍ່ພຽງແຕ່ໄດ້ຮັບຄວາມຮູ້ອັນກວ້າງຂວາງກ່ຽວກັບຄຳສັບນັ້ນໆ ແຕ່ຍັງຮູ້ໄປເຖິງຮີດຄອງປະເພນີບູຮານ ຄວາມຮູ້ໃນທາງສາສະຫນາພຸດ ແລະສາດສະຫນາ

ພຣາມນຳອີກ ຕົວຢ່າງ ດ້ວຍຄຳວ່າ **ຈະຕຸ** ເຊິ່ງແປວ່າ ສີ່ ຄຳດຽວ ທ່ານໄດ້ຍົກຕົວຢ່າງການໃຊ້ເປັນສິບຄຳໆຄື **ຈະຕຸປັດຈັຍ** **ຈະຕຸບໍຣິສັດ** ຈາຕຸປາຣິສຸດທີສິນ ທັງໃຫ້ຄຳແປລະອຽດວ່າ ສິບຂໍ້ໃດມີຄວາມໝາຍຢ່າງໃດ ເຊິ່ງສຳລັບຜູ້ອ່ອນດ້ອຍ ໃນທາງຄຳພີສາສະໜາຄຳສອນແລ້ວ ກໍສາມາດຮຽນຮູ້ແລະເຂົ້າໃຈໂດຍພື້ນຖານໄດ້ອີກຕົວຢ່າງນຶ່ງ ແມ່ນຄຳ **ທັມ-ທັມມະ** ມີຕົວຢ່າງປະກອບແລະຄຳສັບທີ່ໃຊ້ ທັມມະອອກໜ້າເປັນຊາວໆຄຳ ພ້ອມດ້ວຍລາຍລະອຽດ ພໍປານວ່າພວມອ່ານຄຳພີທາງສາສະໜາພຸດຢູ່ ຫລື ແມ່ນແຕ່ຄຳງ່າຍໆເຊັ່ນວ່າ **ນັກ** ທ່ານກໍຫາຕົວຢ່າງມາສະແດງການນຳໃຊ້ໄວ້ເປັນສິບໆແບບ ນັບວ່າເປັນປະໂຫຍດແກ່ຜູ້ຢາກຮູ້ ຢາກຮຽນແທ້ໆ ແມ່ນແຕ່ຊາວຕ່າງປະເທດ ທີ່ຢາກຮູ້ຄວາມໝາຍຂອງຄຳໃດຄຳນຶ່ງທີ່ຕົນບໍ່ແນ່ໃຈ ກໍສາມາດຊອກອ່ານແລະເຂົ້າໃຈໄດ້.

# ການປັບປຸງ ດັດແປງ ໃນການຈັດພິມຄັ້ງນີ້ ມີ

(1) ຕື່ມການຂຽນສະກົດຄຳແບບໃໝ່(ປັດຈຸບັນ)ໄວ້ຄຽງຂ້າງ ເຊັ່ນ ກະເສຕກັມ/ກະເສດຕະກຳ; ວິສວະກອນ/ວິດສະວະກອນ ພິຊິຕມານ/ພິຊິດຕະມານ ເພື່ອໃຫ້ເປັນປະໂຫຍດຢ່າງຮອບດ້ານແກ່ຜູ້ຊົມໃຊ້ຄົ້ນຄວ້າ ພ້ອມກັບວິທີການຂຽນແບບໃໝ່ (ສະກົດຕາມສຽງ) ໃຫ້ແກ່ສັບທີ່ຂຽນດ້ວຍຕົວສະກົດພິເສດ ຄຽງຄູ່ກັບໄວ້ທັງນີ້ ເພື່ອຊ່ອຍໃຫ້ນັກຄົ້ນຄວ້າຣຸ່ນໃໝ່ທີ່ສົນໃຈ ຢາກຮູ້ຮາກສັບທີ່ມາຈາກພາສາປາລີແລະສັນສະກຣິດ ສາມາດເຂົ້າໃຈກົກເຄົ້າຂອງຄຳ.

(2) ແກ້ໄຂຄວາມຜິດພາດດ້ານພິມຕົກ ເຊັ່ນສະກົດຄຳ ແລະລຳດັບບາງຄຳຍ້ອນການຕັດຕໍ່ໜ້າຢູ່ໃນການຈັດພິມຄັ້ງກ່ອນ ເນື່ອງຈາກການສະກົດບາງຄຳຍັງບໍ່ທັນເປັນເອກະພາບກັນ ເຊັ່ນ ເສັ້ນ ເວັ້ນ ໃນປຶ້ມວັດຈະນານຸກົມ ເກົ່າເພິ່ນຂຽນທັງສອງແບບຄື

ເສັ້ນ/ເສັ້ນ ເວັ້ນ/ເວັ້ນ ສຳຫລັບ/ ສຳລັບ...

ໃນການຈັດພິມຄັ້ງນີ້ ພວກເຮົາໄດ້ພະຍາຍາມຂຽນໃຫ້ເປັນຢ່າງດຽວກັນຄື ເສັ້ນ ເວັ້ນ ສຳລັບ ໆລໆ ແຕ່ເຖິງປານນັ້ນ ກໍອາດຈະຍັງມີບາງບ່ອນຫລົງເຫລືອ ເພາະກວດກາບໍ່ຖ້ວນທົ່ວດີ ແຕ່ຢ່າງໃດກໍດີ ເວລາອ່ານປະໂຫຍກແລ້ວ ຜູ້ອ່ານສ່ວນຫລາຍຈະເຂົ້າໃຈໃນຄວາມຫມາຍດຽວກັນ ຄຳລາວບາງຄຳອາດອອກສຽງໄດ້ທັງແບບສຽງສັ້ນສຽງຍາວໂດຍທີ່ມີຄວາມຫມາຍຄືເກົ່າ(ເສັ້ນ/ເສັ້ນ ຈະຂຽນວ່າທາງເສັ້ນນຶ່ງ ຫລື ທາງເສັ້ນນຶ່ງ ກໍຄົງເຂົ້າໃຈຄືກັນຫລື ເວັ້ນ/ເວັ້ນ) ແຕ່ກໍມີຫລາຍຄຳທີ່ເມື່ອຂຽນຜິດສຽງ ຜິດຮູບໄປ ຄວາມຫມາຍກໍປ່ຽນໄປນຳ ດັ່ງ ເລີກ/ເລີກ ເດີກ/ເດີກ ຮຸກ/ຮູກ ທັງສອງຄຳ ເປີກ(ສາ) ກັບ ເປີກ (ລອກອອກ)... ເຊິ່ງມີຄວາມໝາຍ ຕ່າງກັນຢ່າງຂາດຂັ້ນ ດັ່ງນັ້ນເວລາໃຊ້ ຈຳຕ້ອງໄດ້ລະວັງ ແລະຄວນຈະຂຽນໃຫ້ຖືກ ໄດ້ຄວາມຫມາຍທີ່ຕ້ອງການແທ້ໆ.

(3) ປັບປຸງຂໍ້ມູນທີ່ເຫັນວ່າບໍ່ສອດຄ່ອງກັບການຄົ້ນພົບປັດຈຸບັນ ເມື່ອເຫັນວ່າຂໍ້ເທັດຈິງບາງຢ່າງ ບໍ່ສອດຄ່ອງກັບສິ່ງຄົ້ນພົບໃຫມ່ໂດຍສະເພາະໃນທາງ ວິທະຍາສາດ ພວກເຮົາກໍໄດ້ພະຍາຍາມປັບປຸງໃຫ້ສອດຄ່ອງກັບຂໍ້ມູນໃຫມ່ສັບຊ້ອນ ບາງປະໂຫຍກທີ່ເຫັນວ່າບໍ່ຄັກແນ່ ຈະແຈ້ງ (ດັ່ງ ກົງສູນ)

# ຂໍ້ຫຍຸ້ງຍາກ

ເນື່ອງຈາກວ່າ ປັດຈຸບັນ ຄົນຮຸ່ນໃຫມ່ ບໍ່ຮູ້ໃຊ້ຄຳສັບທີ່ໃຊ້ຕົວ ຣ ຄື ໃນເມື່ອກ່ອນ ເຊິ່ງເກືອບ100 % ເປັນຄຳທີ່ແຜງຈາກຄຳປາລີແລະສັນສະກຣິດ ແຕ່ເພື່ອຢາກຄົງຄຸນຄ່າຂອງປຶ້ມຫົວນີ້ໄວ້ໃນມາດຕະຖານເດີມຂອງເພິ່ນ ຈຳເປັນຈຶ່ງບໍ່ໄດ້ຈັດລຳດັບຄຳສັບໃຫມ່ ແລະຮັກສາທຸກສັບທີ່ຂຶ້ນຕົ້ນ ດ້ວຍຕົວ ຣ ເພາະຖ້າປ່ຽນໄປ ກໍເຫັນວ່າ ບໍ່ໄດ້ຕື່ມຫຍັງ

ເພາະເປັນຄຳໃຊ້ໃນສາສະໜາ ສ່ວນຄຳໃດທີ່ມີຕົວ ຣ ໃນກາງຄຳ ຫລື ທ້າຍຄຳ ກໍໄດ້ປ່ຽນຕາມຄວາມນິຍົມຂອງລາວ ເຊິ່ງກໍບໍ່ສາມາດຕັດສິນເດັດຂາດວ່າ ຢ່າງໃດຖືກຕ້ອງກວ່າໝູ່ ດັ່ງນັ້ນ ໃນກໍລະນີ ທີໜຶ່ງ ຈຶ່ງບໍ່ປ່ຽນຮູບຄຳ ສ່ວນໃນກໍລະນີທີສອງປ່ຽນຕາມຄວາມນິຍົມ

ຕົວຢ່າງ: ຣັກສາ (ສ.) (ບໍ່ປ່ຽນຮູບ) ແຕ່ໃຫ້ຄຳແປ ວ່າ ຮັກສາ ຕາມຄວາມນິຍົມ

ຊາຕິ (ປ. ຣັຕຕິ ສ. ຣັຕຣີ) ລາວເຮົານິຍົມໃຊ້ ລາຕີ ບໍ່ໃຊ້ ຣາຕີ ຈຶ່ງບໍ່ປ່ຽນຮູບຄືກັນ

ອະນຸຣັກສ໌ ເຊິ່ງກໍເປັນຄຳສັບປາລີ ລາວເຮົານິຍົມໃຊ້ ອະນຸລັກ ຫລື ອະນຸຮັກ ໄດ້ໃຫ້ໄວ້ທັງສອງຮູບ

ນອກນີ້ ກໍຍັງມີຄວາມຫຍຸ້ງຍາກໃນການສະກົດຄຳ ທີ່ເມື່ອກ່ອນໃຊ້ສະກົດພິເສດໃຊ້ອັກສອນຈູງ ອັກສອນນຳ ກໍໄດ້ຂຽນວິທີອ່ານໄວ້ໃຫ້ ແຕ່ກໍອາດຈະຍັງມີຂໍ້ຂາດຕົກບົກພ່ອງຢູ່

ຕົວຢ່າງ

ວິປລາບ (ປ. ວິປປລາປ ) ຂຽນ ແລະ ອ່ານ : ວິບປະລາບ

ວິປລາດ(ປ. ວິປປລາສ) ຂຽນ ແລະ ອ່ານ ວິບປະລາດ

ວິບປຣິດ (ປ. ວິປປຣິຕ) ຂຽນ ແລະອ່ານ ວິບປະຫຣິດ ແທນທີ່ ຈະເປັນ ວິບປະຣິດ

ອຸປຣາດ (ປ. ອຸປຣາຊ) ຂຽນແລະອ່ານ ອຸບປະຫຣາດ/ອຸບປະຫລາດ

ອັປມານ (ປ. ອັປປມາລ) ອ່ານ ແລະຂຽນ ອັບປະມານ

ອັປມາດ (ປ. ອັປປມາສ) ອ່ານແລະຂຽນ ອັບປະໝາດ

ອັປລັກ (ສ. ອັປປລັກສນ) ອ່ານແລະ ຂຽນ ອັບປະລັກ

ອີກຢ່າງນຶ່ງ ພວກເຮົາກໍບໍ່ຄວນລືມວ່າ ເມື່ອຫ້າສິບປີກ່ອນ ຫລື ແມ່ນແຕ່ໃນດຽວນີ້ ຄຳໃນພາສາລາວປະເພດຄຳມູນນັ້ນ ມີຄວາມຄ້າຍຄຽງ ຫລື ແມ່ນຄຳດຽວກັນກັບຄຳໃນພາສາໄທ ເຊັ່ນ ພໍ່ ແມ່ ນ້ອງ ພີ່ ກິນ ໄປ ນັ່ງ ນອນ ລົມ ເລືອດ ຫູ ຕາ ປາກ... ພຽງແຕ່ການອອກສຽງເທົ່ານັ້ນ ທີ່ຜິດແຜກກັນ ຕາມສຳນຽງທ້ອງຖິ່ນ ດັ່ງນັ້ນຫລາຍທ່ານອາດຄຶດວ່າ ຄຳນັ້ນ ຄຳນີ້ ບໍ່ແມ່ນ ຫລື ແມ່ນ ຄຳລາວເຮົາ ແຕ່ຄຳພາສາຂອງຊາດໃດກໍມີອັນປ່ຽນແປງພັດທະນາແລະຕົກເຮັ່ຽເສຽໄປ ທັງກໍຕື່ມເຕີມເຂົ້າໃໝ່ໄດ້ຕາມສະພາບ ແຕ່ການຈັດພິມຂອງພວກເຮົາໃນຄັ້ງນີ້ ບໍ່ສາມາດຈັດຄຳສັບໃໝ່ໆເຫລົ່ານັ້ນເຂົ້ານຳໝົດ ເພາະຈະເປັນການລຶບລ້າງຮ່ອງຮອຍຂອງເກົ່າທີ່ເພິ່ນເຮັດໄວ້ ແລະກໍແມ່ນດ້ວຍເຈດຕະນາອັນນີ້ເອງ ທີ່ການຈັດພິມຄັ້ງນີ້ຈຶ່ງມີຂຶ້ນ

ພວກຂ້າພະເຈົ້າ ຂໍຂອບໃຈ ມູນນິທິ ໂຕໂຢຕາ ປະເທດຍີ່ປຸ່ນ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC), ທ່ານ ຈັນທະສອນ ອິນທະວົງ, ທ່ານ ວີຣະເສນ ວີຣະວົງສ໌ ແລະທ່ານ ວີຣະພົນ ວີຣະວົງສ໌ ທີ່ສະໜັບສະໜຸນການຈັດພິມຄັ້ງນີ້ ດ້ວຍຢາກໃຫ້ປຶ້ມນີ້ມີພຽງພໍຕໍ່ຄວາມຕ້ອງການຂອງຜູ້ຊົມໃຊ້ນັກຄົ້ນຄວ້າ ແລະຜູ້ສົນໃຈທົ່ວໆໄປ

ຄຸນງາມຄວາມດີແລະກຸສົນລະກັມໃດທີ່ຈະເກີດມີມາ ໃນຕໍ່ໜ້າ ພວກຂ້າພະເຈົ້າຂໍອຸທິດໃຫ້ແກ່ ຍາພໍ່ມະຫາສິລາ ແລະ ແມ່ມາລີ ວີຣະວົງສ໌ ຜູ້ໄດ້ສ້າງມໍລະດົກລ້ຳຄ່າທາງພູມປັນຍາອັນນີ້ໄວ້ໃຫ້ຢູ່ຄູ່ຊາດ ແລະແຜ່ນດິນລາວ ແລະລູກຫລານລາວທຸກຄົນ

ທີ່ ວຽງຈັນ ສວນໄຜ່ພັນກໍ, ບ້ານໄຮ່ ທ່າງ່ອນ

ທັນວາ 2006

ຕາງໜ້າຄະນະຈັດທຳ

*ດວງເດືອນ ວີຣະວົງສ໌ ບຸນຍາວົງ*

# ຄຳນຳຂອງກະຊວງສຶກສາທິການ

## ສຳຫລັບຫນັງສື ວັຈນານຸກົມພາສາລາວຂອງ ມະຫາສິລາ ວີຣະວົງສ໌
## ເລຂານຸການ ຄນະກັມມະການ ວັນນະຄະດີ

ເນື່ອງຈາກໄດ້ມີພຣະຣາຊໂອງການເລກທີ 10 ລົງວັນທີ 27 ມົກຣາ(ຊັງວິເຢ) 1949 ກຳນົດການສະກົດຄຳໃນພາສາລາວໄວ້ໂດຍໃຫ້ໃຊ້ສຽງ ຫລື ສຳນຽງເປັນຫລັກ ແຕ່ທໍ່ທີ່ໄດ້ສັງເກດເບິ່ງການສະກົດຕົວ ທີ່ນາຍຄຣູໃຊ້ໃນການສັ່ງສອນນັກຮຽນ ແລະທີ່ໃຊ້ໃນການສະກົດຕົວຕາມແບບຮຽນຕ່າງໆ ຍັງບໍ່ທັນເປັນແບບດຽວກັນເທື່ອ ເນື່ອງຈາກຜູ່ໃຊ້ ໄດ້ອີງຕາມຄວາມຫມາຍຂອງພຣະຣາຊໂອງການດັ່ງກ່າວ ໄປໃນທຳນອງຕ່າງກັນ ທັງນີ້ ເພື່ອໃຫ້ນາຍຄຣູຜູ່ອົບຣົມສັ່ງສອນນັກຮຽນແລະຜູ່ມີຫນ້າທີ່ແຕ່ງ ຫລື ກວດກາແບບຮຽນທີ່ຈະພິມຂຶ້ນໃຊ້ ໄດ້ມີແບບສະບັບ ເພື່ອໃຫ້ການສະກົດຕົວໄດ້ເປັນໄປໃນແນວດຽວກັນ ຈຶ່ງໄດ້ສເນີຕໍ່ຄນະກັມມະການວັນນະຄະດີເພື່ອຂໍໃຫ້ມອບຫມາຍໃຫ້ຜູ່ໃດຜູ່ນຶ່ງຮຽບຮຽງວັຈນານຸກົມພາສາລາວໃຫ້ມີຂຶ້ນໃຊ້ໄປຊົ່ວຊາກ່ອນ ທີ່ປະຊຸມຄນະກັມມະການວັນນະຄະດີຈຶ່ງໄດ້ມອບໃຫ້ ມະຫາສິລາ ວີຣະວົງສ໌ ເລຂານຸການກັມມະການວັນນະຄະດີ ກວດທານຕົ້ນສະບັບເດີມຂອງກັມມະການວັນນະຄະດີ ທີ່ມີຢູ່ແລ້ວ ໃຫ້ຮຽບຮ້ອຍ ແລ້ວໃຫ້ກະຊວງສຶກສາທິການເອົາໄປພິມໃຊ້ເປັນສະບັບຊົ່ວຄາວໄປຊົ່ວຊາກ່ອນ ຈົນກວ່າຈະໄດ້ແກ້ໄຂໃນຄາວຕໍ່ໄປ ເພາະການປັບປຸງແກ້ໄຂ ອາດຈະຕ້ອງໃຊ້ເວລານານຫລາຍປີ ຈຶ່ງໃຫ້ມີສະບັບຊົ່ວຄາວ ໃຊ້ໄປກ່ອນ

ບັດນີ້ ມະຫາສິລາ ວີຣະວົງສ໌ ໄດ້ຮຽບຮຽງ ວັຈນານຸກົມພາສາລາວ ນີ້ຮຽບຮ້ອຍແລ້ວເອົາມາມອບໃຫ້ກະຊວງສຶກສາທິການ ເພື່ອຈັດພິມຂຶ້ນໃຊ້ໃນຣາຊການ ໃຫ້ເປັນແບບມາຕຖານດຽວກັນຕໍ່ໄປ ກະຊວງສຶກສາທິການ ຈຶ່ງຂໍຂອບຄຸນ ມະຫາສິລາ ວີຣະວົງສ໌ ຜູ່ຮຽບຮຽງ ແລະຄນະກັມມະການວັນນະຄະດີ ໃນການໃຫ້ຄວາມຮ່ວມມືຊ່ອຍເຫລືອເທື່ອນີ້ເປັນຢ່າງດີ ແລະໂດຍຈຳເພາະຜູ່ຮຽບຮຽງ ເຊິ່ງໄດ້ໃຊ້ຄວາມຮູ້ ຄວາມອຸດສາຫະວິຣິຍະພາບເປັນເວລາເຫິງນານ ຕລອດເຖິງການພິມຕົ້ນສະບັບຢ່າງຮຽບຮ້ອຍ ກະຊວງສຶກສາທິການ ຂໍຂອບຄຸນໃນວິທຍາທານ ອັນເປັນຄຸນປໂຍດຍິ່ງຕໍ່ການສຶກສາຂອງຊາດໂດຍສ່ວນຣວມ ແລະຂໍອວຍພອນໃຫ້ຜູ່ຮຽບຮຽງຈົ່ງມີຄວາມສຸກຄວາມຈະເຣີນຍິ່ງໆຂຶ້ນໄປທຸກປະການ ຕລອດກາລນານເຖີ້ນ

*ວຽງຈັນ ວັນທີ13 ມົກຣາ 1960*
*ຣັຖມົນຕຣີວ່າການກະຊວງສຶກສາທິການ*
*ເຊັນ ທ້າວ ຫຍຸຍ ອະໄພ*

# ຄຳນຳຂອງຜູ່ຂຽນ

ວັຈນານຸກົມ ສະບັບນີ້ໄດ້ຮຽບຮຽງຂຶ້ນ ຕາມດຳຣັດຈັດຕັ້ງຄນະກັມມະການວັນນະຄະດີ ສະບັບ ເລກທີ 207 ລົງວັນທີ 27 ສິງຫາ (ອຸດ) 1951 ທີ່ໄດ້ບົ່ງໜ້າທີ່ການຂອງຄນະກັມມະການ ໄວ້ ມີດັ່ງນີ້:

- ພິຈາຣະນາຮ່າງແບບສອນອ່ານທັງປວງ ແລະວັນນະຄະດີ ສ່ວນທີ່ກ່ຽວກັບການສຶກສາ
- ການສຶກສາກ່ຽວກັບໄວຍາກອນ ພາສາ ແລະອັກຂຣະລາວ ແລະຮຽບຮຽງເອົາວັນນະຄະດີຕ່າງ ປະເທດ
- ພິຈາຣະນາການພິມໜັງສືວັນນະຄະດີ ທີ່ກ່ຽວກັບພາສາ ແລະອັກສອນສາດລາວ ອອກຢາຍ
- ຈັດຕັ້ງລະບຽບການຂຽນອັກສອນລາວ
- ຈັດການແຕ່ງວັຈນານຸກົມລາວຂຶ້ນ
- ກຳນົດຣາງວັນປະຈຳປີ ສຳລັບເປັນບຳເນັດແກ່ຜູ່ແຕ່ງໜັງສືລາວໄດ້ດີ ຕາມຫົວຂໍ້ທີ່ທາງຄນະ ກັມມະການກຳນົດໃຫ້

ຕາມຄວາມໃນດຳຣັດສະບັບນີ້ ໄດ້ກຳນົດຈຳນວນຄນະກັມມະການທັງໝົດ 55 ທ່ານແຕ່ວ່າ ຄນະກັມມະການວັນນະຄະດີ ທີ່ໄດ້ຈັດຕັ້ງຂຶ້ນຂ້າງຕົ້ນນັ້ນ ມີແຕ່ 5 ທ່ານ ຄື:

| | |
|---|---|
| 1. ພນະທ່ານ ກຸ ອະໄພ | ເປັນປະທານ |
| 2. ພນະທ່ານ ຜຸຍ ປັນຍາ | ຮອງປະທານ |
| 3. ພນະທ່ານ ບົງ ສຸວັນນະວົງ | ກັມມະການ |
| 4. ທ່ານ ປີແອ ງິນ | ກັມມະການ |
| 5. ທ່ານມະຫາ ສີລາ ວີຣະວົງສ໌ | ກັມມະການ |

ຕໍ່ມາໄດ້ມີດຳຣັດແຕ່ງຕັ້ງກັມມະການເຂົ້າຕື່ມອີກຕາມລຳດັບ ເພື່ອໃຫ້ວຽກຂອງຄນະ ກັມມະການ ດຳເນີນໄປດ້ວຍດີ ຈົນເຖິງປີ 1953 ຈຶ່ງມີຄນະກັມມະການວັນນະຄະດີຕື່ມເຂົ້າເຖິງ 14 ທ່ານ ຄື:

| | |
|---|---|
| 1. ພນະທ່ານ ກຸ ອະໄພ | ປະທານກິຕິມະສັກ |
| 2. ພນະທ່ານ ຜຸຍ ປັນຍາ | ຮອງປະທານ |
| 3. ທ່ານ ປີແອ ງິນ | ປະທານກັມມະການຈັດການປະຈຳປີ |
| 4. ພນະທ່ານ ບົງ ສຸວັນນະວົງ | ຮອງປະທານ |

5. ພນະທ່ານ ຫຍຸຍ ອະໄພ ກັມມະການ
6. ທ່ານອາຈານ ໄຕ ແກ້ວຫລວງໂຄດ ກັມມະການ
7. ທ່ານພຣະຍາ ຄູນ ພິລາວັນ ກັມມະການ
8. ທ່ານ ພູວົງ ພິມມະສອນ ກັມມະການ
9. ທ່ານ ເກື່ອງ ປະທຸມມະຊາດ ກັມມະການ
10. ທ່ານ ສຸພັນ ບູ້ງຊາເດີລາບຣິສ ກັມມະການ
11. ທ່ານ ຫນູທັກ ສິດທິມໍຣະດາ ກັມມະການ
12. ທ່ານ ທ້າວເກນ ກັມມະການ
13. ທ່ານມະຫາ ພູມີ ຈິດຕະພົງ ກັມມະການ
14. ທ່ານມະຫາ ສີລາ ວີຣະວົງສ໌ ກັມມະການ ແລະ ເລຂານຸການ

ສະນັ້ນການຮຽບຮຽງ ແລະການຈັດແຕ່ງຫນັງສືວັຈນານຸກົມນີ້ ຈຶ່ງເປັນຫນ້າທີ່ຂອງຄນະກັມມະການວັນນະຄະດີໂດຍຈຳເພາະ ແຕ່ວ່າເມື່ອຄນະກັມມະການໄດ້ເຂົ້າປະຊຸມກັນຫລາຍຄັ້ງຫລາຍທີ່ນ ຕັ້ງແຕ່ ປີ1954 (ພ. ສ. 2495) ເປັນຕົ້ນມາ ກັມມະການບໍ່ສາມາດຈະຮ່ວມປະຊຸມຮຽບຮຽງໄດ້ສະດວກ ຍ້ອນວ່າ ກັມມະການແຕ່ລະທ່ານ ລ້ວນແຕ່ເປັນຂ້າຣາຊການຊັ້ນຜູ່ໃຫຍ່ ມີວຽກການຂ້ອງຄາຍ່າງຫລວງຫລາຍເຫລືອມືຢູ່ແລ້ວ ແລະລາງທ່ານ ກໍຖືກໄປຣາຊການຕ່າງປະເທດຢູ່ສເມີເທື່ອລະຫລາຍໆເດືອນ ດັ່ງນັ້ນ ຄນະກັມມະການ ຈຶ່ງໄດ້ປະຊຸມກັນເຫັນດີມອບຫມາຍວຽກການສ່ວນນີ້ໃຫ້ ຂ້າພະເຈົ້າເປັນຜູ່ຮຽບຮຽງ ແລະທ້ອນໂຮມຄຳລາວທັງຫມົດຂຶ້ນ ເມື່ອທ້ອນໂຮມໄດ້ພໍສົມຄວນແລ້ວ ຈຶ່ງໄດ້ສເນີຕໍ່ຄນະກັມມະການປະຊຸມພິຈາຣະນາ ລົງມະຕິເປັນຄຳໆໄປ ການເຮັດດັ່ງນີ້ ກໍເປັນໄປບໍ່ໄດ້ສະດວກດີອີກ ຍ້ອນວ່າຄຳເວົ້ານຶ່ງໆ ກັມມະການຕ້ອງມາເສັຽເວລາສົ້ຖຽງກັນນັບເປັນເວລາຕັ້ງຫລາຍຊົ່ວໂມງ ຈຶ່ງຕົກລົງກັນໄດ້ ຖ້າຫາກການເປັນໄປດັ່ງນີ້ ເຫັນວ່າກວ່າຈະຕົກລົງກັນໄດ້ຫມົດທຸກຄຳຕ້ອງໃຊ້ເວລາເຖິງ 20 ຫລື 30 ປີ ຈຶ່ງຈະສຳເຣັດບໍຣະບວນ ຄນະກັມມະການຫວນເຫັນຄວາມຊັກຊ້າເສັຽເວລາດັ່ງກ່າວນີ້ ແລະພິຈາຣະນາເຫັນວ່າ ເວລານີ້ ເປັນເວລາຈຳເປັນ ທີ່ປະເທດຊາດຂອງເຮົາຕ້ອງໃຊ້ຫນັງສືວັຈນານຸກົມໂດຍດ່ວນ ເພື່ອກຳນົດການຂຽນຫນັງສືລາວ ແລະພາສາລາວ ໃຫ້ຖືກຕ້ອງເປັນລະບຽບອັນນຶ່ງອັນດຽວກັນ ເພາະປະເທດລາວເຮົາໄດ້ເປັນປະເທດເອກະຣາດແລ້ວ ແລະຣັຖທັມມະນູນລາວກໍໄດ້ບົ່ງໄວ້ວ່າ: ໃຫ້ໃຊ້ຫນັງສືລາວ ເປັນຫນັງສືຣາຊການທົ່ວປະເທດ ແຕ່ວ່າການຂຽນຫນັງສືລາວທຸກວັນນີ້ ບໍ່ລົງຮອຍເປັນແບບດຽວກັນໄດ້ ຕ່າງຄົນຕ່າງກໍຂຽນໄປຕາມແບບ ທີ່ໄດ້ເຄີຍຮຽນມາຈາກທີ່ຕ່າງໆກັນ ທັງນີ້ກໍຍ້ອນບໍ່ມີຫນັງສືວັຈນານຸກົມ ແລະໄວຍາກອນ ທີ່ກຳນົດການຂຽນໄວ້ໃຫ້ເປັນແບບຢ່າງ ນອກຈາກນີ້ໃນວົງການສຶກສາ

ທາງກະຊວງສຶກສາທິການ ກໍໄດ້ປ່ຽນແປງຫລັກສູດ ການສຶກສາຂັ້ນປະຖົມຂຶ້ນໃຫມ່ ໂດຍໃຫ້ໃຊ້ຫນັງສືລາວພາສາລາວເປັນສ່ວນສຳຄັນໃນການສຶກສາຂັ້ນຕົ້ນ ດັ່ງນີ້ ຫນັງສືວັຈນານຸກົມຈຶ່ງເປັນຂອງຈຳເປັນຕ້ອງຈັດພິມຂຶ້ນຢ່າງໄວໂດຍແທ້ ເພື່ອໃຫ້ທັນເວລາກັບຄວາມຕ້ອງການ

ຄນະກັມມະການເຫັນຄວາມຈຳເປັນດັ່ງກ່າວນີ້ ຈຶ່ງໄດ້ປະຊຸມປຶກສາຫາລືກັນ ຊອກສແວງຫາຊ່ອງທາງ ທີ່ຈະໃຫ້ຫນັງສືວັຈນານຸກົມນີ້ມີຂຶ້ນໂດຍດ່ວນ ແລ້ວໄດ້ຕົກລົງກັນວ່າ ຈຳຕ້ອງຊອກເອົາຄົນຜູ້ມີຄວາມສາມາດ ແລະໃຫ້ໄດ້ທຸກພາກມາຊ່ອຍກັນຮຽບຮຽງຄຳລາວຮ່ວມກັບຂ້າພະເຈົ້າ ດັ່ງມີແຈ້ງຢູ່ໃນຈົດຫມາຍ ບັນທຶກຂອງຄນະກັມມະການ ສະບັບເລກທີ 33 ລົງວັນທີ 17 ທັນວາ (ເດຊາມ) 1953 ນັ້ນແລ້ວ ແຕ່ຄວາມຕົກລົງນີ້ ເປັນໄປບໍ່ໄດ້ອີກດ້ວຍຄວາມຂັດຂ້ອງຫລາຍປະການ ສະນັ້ນຂ້າພະເຈົ້າຈຶ່ງໄດ້ຮັບອະນຸມັດຈາກຄນະກັມມະການ ໃຫ້ເປັນຜູ້ທ້ອນໂຮມຄຳ ແລະຮຽບຮຽງຄຳແຕ່ຜູ້ດຽວຕລອດມາ ຂ້າພະເຈົ້າຂໍຮັບສາຣະພາບໄວ້ໃນທີ່ນີ້ວ່າຫນັງສືວັຈນານຸກົມນີ້ ຕ້ອງມີຄຳຂາດຕົກບົກພ່ອງຢູ່ເປັນອັນມາກ ຍ້ອນວ່າຄຳເວົ້າພາສາລາວ ແຕ່ລະພາກ ແຕ່ລະທ້ອງຖິ່ນຍ່ອມແຕກຕ່າງກັນຫລາຍ ເພາະວ່າປະເທດລາວເຮົານີ້ ມີຫລາຍຊົນເຜົ່າສືບປົນກັນມາ ແລະມີເຂດແດນຕິດຕໍ່ຫລາຍປະເທດ ອັນເປັນເຫດໃຫ້ມີພາສາແຕກຕ່າງກັນ ເປັນການສຸດວິສັຍ ທີ່ຂ້າພະເຈົ້າຈະຮູ້ທົ່ວເຖິງໄດ້ ແຕ່ເຖິງຢ່າງນັ້ນກໍຕາມ ຂ້າພະເຈົ້າເຊື່ອແນ່ວ່າ ຫນັງສືວັຈນານຸກົມນີ້ຄົງຈະມີປໂຍດແກ່ຜູ້ໃສ່ໃຈໄດ້ເປັນຢ່າງດີ ໃນສອງປະການຄື:

ປະການນຶ່ງ ກ່ຽວກັບການຂຽນຄຳລາວ ຫລັກການຂຽນຄຳລາວໃນຫນັງສືນີ້ ໄດ້ຂຽນຕາມຂໍ້ບັງຄັບທີ່ກຳນົດໄວ້ໃນພຣະຣາຊໂອງການ ເລກທີ 10 ເຊິ່ງແກ້ໄຂໂດຍຄນະກັມມະການວັນນະຄະດີນັ້ນແລ້ວ ຂໍ້ໃຫຍ່ໃຈຄວາມຫລັກການຂຽນຄຳລາວທີ່ກ່າວໄວ້ໃນພຣະຣາຊໂອງການເລກທີ 10 ນັ້ນແມ່ນ ໃຫ້ຂຽນຕາມສຽງຂອງຄຳເວົ້າ ໂດຍບໍ່ຖືວ່າຄຳນັ້ນໆຈະມາຈາກພາສາໃດ ແລະເຄົ້າມູນຂອງຄຳນັ້ນ ເດີມເຂົາຈະຂຽນຢ່າງໃດກໍຕາມ ເມື່ອເອົາມາໃຊ້ເປັນພາສາລາວແລ້ວ ແລະລາວອອກສຽງຢ່າງໃດ ກໍຂຽນຢ່າງນັ້ນ ບໍ່ຕ້ອງອ້າວຫາໂຕສະກົດຂອງເຂົາ ໂຕຢ່າງຄຳວ່າ **ພານ** ເດີມເປັນພາສາບາລີ ເຂົາຂຽນເປັນ **ພາລ** ແລະເຂົາອອກສຽງວ່າ **ພາລະ** ຕົກມາເປັນພາສາລາວ ນິຍົມພຍັນຊນະທ້າຍເປັນໂຕສະກົດ ແລ້ວອອກສຽງເປັນ "ພານ" ດັ່ງນັ້ນ ຈຶ່ງຕ້ອງຂຽນເປັນ ພານ ໂລດ ຖ້າອ່ານ ອອກສຽງວ່າ "**ພານລະຊົນ**" ຈຶ່ງຂຽນ **ພາລຊົນ** ຕາມສຽງທີ່ອອກ (ຫລັກການຂຽນດັ່ງກ່າວນີ້ ມີອະທິບາຍໄວ້ຢ່າງແຈ່ມແຈ້ງແລ້ວ ໃນໄວຍາກອນພາກອັກຂຣະວິທີ) ແຕ່ວ່າຄຳຈຳພວກທີ່ໄດ້ມາຈາກພາສາອື່ນ ສ່ວນຫລາຍ ເຊິ່ງແມ່ນພາສາບາລີດັ່ງກ່າວແລ້ວ ຂ້າພະເຈົ້າໄດ້ຂຽນມູນຄຳເດີມໄວ້ທາງທ້າຍຄຳນັ້ນໆດ້ວຍ ໂຕຢ່າງຄຳວ່າ ປະເທດ ມະນຸດ ພຍາບາດ ເຫດ

ໄດ້ຂຽນຄຳເດີມໄວ້ໃນວົງເລັບເປັນ "ປະເທສ ມນຸສສ ພຍາບາທ ເທສນ " ດັ່ງນີ້ເປັນຕົ້ນ ສະນັ້ນ ເມື່ອທ່ານຜູ່ໃດສົງສັຍວ່າ ຄຳໃດຕ້ອງຂຽນຢ່າງໃດ ແລະເຄົ້າມູນຂອງຄຳນັ້ນ ເປັນມາຢ່າງ ໃດ ໃຫ້ເປີດເບິ່ງໃນວັຈນານຸກົມນີ້ ກໍຈະຮູ້ໄດ້ຕລອດ

ປະການທີສອງ ກ່ຽວກັບຄຳເວົ້າ ຄຳເວົ້າທີ່ໄດ້ທ້ອນໂຮມມາໄວ້ໃນໜັງສືວັຈນານຸກົມນີ້ ເຖິງແມ່ນຍັງບໍ່ຄົບຖ້ວນບໍຣິບູນທຸກຄຳ ແລະທຸກພາກ ດັ່ງກ່າວແລ້ວກໍຕາມ ແຕ່ສ່ວນຫລາຍ ທີ່ເປັນສັບສຳຄັນໃຊ້ໃນທາງຣາຊການ ແລະຄຳທີ່ໃຊ້ໄດ້ທົ່ວໄປໃນທຸກພາກ ອັນນັບວ່າເປັນຄຳລາວ ຮ່ວມກັນນັ້ນ ໄດ້ມີຫລາຍເກືອບຄົບຖ້ວນແລ້ວ

ສະນັ້ນ ຈິ່ງຫວັງວ່າ ໜັງສືວັຈນານຸກົມນີ້ ເຖິງແມ່ນຈະເປັນສະບັບຄັ້ງແຣກ ກໍຄົງໄດ້ໃຫ້ ປໂຫຍດ ໃນການຂຽນຄຳ ແລະການຊອກຫາຄຳ ພໍແກ່ການໃຊ້ ໄດ້ຕາມສົມຄວນ

*ວຽງຈັນ, ວັນທີ 9 ສິງຫາ ພຸທສັກຣາດ 2503*
*ມະຫາສິລາ ວີຣະວົງສ໌*

*ກັມມະການ ແລະເລຂານຸການ*
*ຂອງ ຄນະກັມມະການວັນນະຄະດີ ແລະຫົວໜ້າຫ້ອງການ ວັນນະຄະດີ*

# ຄຳນຳ ຂອງຄນະກັມມະການວັນນະຄະດີ

ຄນະກັມມະການວັນນະຄະດີລາວ ໄດ້ຖືກແຕ່ງຕັ້ງຂຶ້ນແຕ່ປີ ຄ.ສ. 1951 ຕາມດຳຣັດຂອງນາຍົກຣັຖມຸນຕີ ສະບັບ ເລກທີ 207 ລົງວັນທີ 27 ສິງຫາ (ອຸດ) ໂດຍອາສັຍພຣະຣາຊໂອງການ ສະບັບ ທີ 132 ລົງວັນທີ 14 ມິຖຸນາ(ຊວງ) ແລະ ເລກທີ 34 ລົງວັນທີ 28 ກຸມພາ (ເຟູວີເຢ) 1950 ໃນມາດຕາສາມແຫ່ງດຳຣັດ ໄດ້ກຳນົດຈຳນວນກັມມະການ ໄວ້ທັງຫມົດ 25 ທ່ານ ແຕ່ວ່າ ໄດ້ແຕ່ງຕັ້ງຂຶ້ນກ່ອນ ແຕ່ພຽງ 5 ທ່ານ ເພື່ອໃຫ້ເປັນປະຖົມກັມມະການ ທີ່ເປັນປະຖົມສະມາຊິກ 5 ທ່ານ ນັ້ນຄື:

| | |
|---|---|
| 1. ພນະທ່ານ ກຸ ອະໄພ | ເປັນປະທານ |
| 2. ພນະທ່ານ ຜຸຍ ປັນຍາ | ຮອງປະທານ |
| 3. ພນະທ່ານ ບົງ ສຸວັນນະວົງ | ກັມມະການ |
| 4. ທ່ານ ປີແອ ງິນ | ກັມມະການ |
| 5. ທ່ານມະຫາ ສີລາ ວີຣະວົງສ໌ | ກັມມະການ |

ມາຈົນເຖິງປີ ຄ.ສ. 1960 ມີທ່ານຜູ່ມີກຽດຫລາຍທ່ານ ໄດ້ຮັບເຊີນເຂົ້າເປັນກັມມະການຕື່ມອີກຕາມລຳດັບ ຄືປັດຈຸບັນ ໄດ້ມີກັມມະການຢູ່ແລ້ວ 14 ທ່ານ :

| | |
|---|---|
| 1. ພນະທ່ານ ກຸ ອະໄພ | ປະທານກິຕິມະສັກ |
| 2. ພນະທ່ານ ຜຸຍ ປັນຍາ | ຮອງປະທານ |
| 3. ທ່ານ ປີແອ ງິນ | ປະທານກັມມະການຈັດການປະຈຳປີ |
| 4. ພນະທ່ານ ບົງ ສຸວັນນະວົງ | ຮອງປະທານກັມມະການຈັດການປະຈຳປີ |
| 5. ທ່ານ ມະຫາສີລາ ວີຣະວົງສ໌ | ກັມມະການ ແລະເລຂານຸການ |
| 6. ພນະທ່ານ ຫຽຍ ອະໄພ | ກັມມະການ |
| 7. ທ່ານ ເກື້ອງ ປະທຸມມະຊາດ | ກັມມະການ |
| 8. ທ່ານ ຄູນ ພິລາວັນ | ກັມມະການ |
| 9. ທ່ານ ພູວົງ ພິມມະສອນ | ກັມມະການ |
| 10. ທ່ານ ຫນູທັກ ສິດທິມໍຣະດາ | ກັມມະການ |

11. ທ່ານ ພູມີ ຈິດຕະພົງ ກັມມະການ

12. ທ່ານ ເກນ ກັມມະການ

13. ທ່ານ ໄຕ ແກ້ວຫລວງໂຄດ ກັມມະການ

14. ທ່ານສຸພັນ ບົ່ງຊາເດີລາບຣິສ ກັມມະການ

ໃນມາດຕາ 4 ແຫ່ງດຳຣັດຈັດຕັ້ງກັມມະການວັນນະຄະດີ ທີ່ກ່າວມາແລ້ວ ໄດ້ຊີ້ຈຸດໝາຍສຳຄັນແຫ່ງວຽກການສຳຄັນຂອງກັມມະການໄວ້ດັ່ງນີ້:

1. ພິຈາຣະນາຮ່າງແບບສອນອ່ານທັງປວງ ແລະວັນນະຄະດີເດີມ ກ່ຽວກັບການສຶກສາ
2. ການສຶກສາກ່ຽວກັບໄວຍາກອນ ພາສາ ແລະ ອັກສອນສາດ
3. ຮຽບຮຽງເອົາວັນນະຄະດີຕ່າງປະເທດ
4. ພິຈາຣະນາການພິມໜັງສືວັນນະຄະດີ ທີ່ກ່ຽວກັບພາສາແລະອັກສອນສາດລາວອອກຢາຍ
5. ຈັດຕັ້ງຣະບຽບການຂຽນອັກສອນສາດ
6. ຈັດການແຕ່ງວັຈນານຸກົມຂຶ້ນ
7. ກຳນົດຣາງວັນປະຈຳປີ ສຳລັບບຳເນັດແກ່ຜູ້ແຕ່ງໜັງສືໄດ້ດີ ຕາມຫົວຂໍ້ ຄນະກັມມະການກຳນົດໃຫ້

ຄນະກັມມະການຈັດການ ທີ່ໄດ້ຖືກຄັດເລືອກສຳລັບປີ 1951 ແລະ 1952 ມີຄື:

1. ພນະທ່ານ ກຸ ອະໄພ ເປັນປະທານ

2. ພນະທ່ານ ຜຸຍ ປັນຍາ ຮອງປະທານ

3. ທ່ານ ມະຫາສີລາ ວີຣະວົງສ໌ ເລຂານຸການ

ນັບແຕ່ປີ 1953 ເປັນຕົ້ນມາ ຄນະກັມມະການຈັດການ ທີ່ຖືກຄັດເລືອກໃຫ້ດຳເນີນງານຕໍ່ມາຈົນເຖິງປັດຈຸບັນນີ້ແມ່ນ :

ທ່ານ ສົມຈິນ ປີແອ ງິນ ເປັນປະທານ

ພນະທ່ານ ບົງ ສຸວັນນະວົງ ຣອງປະທານ
ທ່ານ ມະຫາສີລາ ວີຣະວົງສ໌ ເລຂານຸການ

ເພື່ອປະຕິບັດການໃຫ້ໄດ້ຜົນຕາມຈຸດໝາຍແຫ່ງດຳຣັດນີ້ ຄນະກັມມະການວັນນະຄະດີ ຈຶ່ງເຫັນດີຍົບຍົກເອົາ ຂໍ້ທີ 5 ແລະ ທີ 6 ແຫ່ງມາດຕາ 4 ຂອງດຳຣັດນີ້ ຄື ການຕັ້ງຣະບຽບຂຽນອັກສອນສາດລາວ ແລະການຈັດແຕ່ງວັຈນານຸກົມລາວ ຂຶ້ນມາພິຈາຣະນາກ່ອນ ເພາະເຫັນວ່າ ການຈະແຕ່ງແບບຮຽນແບບອ່ານຕໍ່ໆໄປ ກໍດີ ການຈະຊໍາຣະແກ້ໄຂໜັງສືວັນນະຄະດີເກົ່າອອກມາພິມກໍດີຈໍາເປັນຕ້ອງຂຽນແລະພິມໃຫ້ຖືກຕ້ອງເປັນຣະບຽບອັນນຶ່ງອັນດຽວກັນ ການສຶກສາໜັງສືລາວແລະພາສາລາວ ຈຶ່ງຈະດໍາເນີນໄປໄດ້ ສະນັ້ນຄນະກັມມະການ ຈຶ່ງໄດ້ຟື້ນຟູເອົາພຣະຣາຊໂອງການເລກທີ 10 ລົງວັນທີ 27 ຊັງວິເຍ 1949 ທີ່ກ່າວດ້ວຍຫລັກການຂຽນໜັງສືລາວ ຂຶ້ນມາພິຈາຣະນາແກ້ໄຂແລ້ວພ້ອມກັບແຕ່ງໄວຍາກອນລາວ ພາກອັກຂຣະວິທີຂຶ້ນ ເປັນສະບັບແຣກ ອັກຂຣະວິທີລາວ ຄື ສຣະ ພຍັນຊນະ ແລະວິທີຂຽນສະກົດຄໍາ ຕລອດເຖິງບັນຍັດເຄື່ອງໝາຍຕ່າງໆໄວ້ຄົບຖ້ວນຕາມລັກສນະຂອງພາສາລາວ ແລະໜັງສືລາວ ໜັງສືໄວຍາກອນລາວ ພາກອັກຂຣະວິທີນີ້ ຄນະກັມມະການໄດ້ປະຊຸມກັນແຕ່ງເຖິງ 10 ເທື່ອ ຈຶ່ງສໍາເຣັດບໍຣະບວນ ແລະໄດ້ຈັດພິມຂຶ້ນແຈກຢາຍຄັ້ງແຣກແຕ່ປີ ຄ.ສ. 1954 ຕໍ່ນັ້ນມາກໍໄດ້ປະຊຸມແກ້ໄຂຕື່ມແຖມ ແລະໄດ້ຈັດພິມຂຶ້ນໃໝ່ອີກໃນປີ ຄ.ສ. 1960 ໃນຂນະເມື່ອແຕ່ງແບບໄວຍາກອນຢູ່ນັ້ນຄນະກັມມະການກໍໄດ້ປະຊຸມກັນວາງຫລັກການແຕ່ງໜັງສືວັຈນານຸກົມລາວຂຶ້ນພ້ອມໆກັນ ຄັ້ງແຣກແຕ່ປີ 1952 ເປັນຕົ້ນມາ ເມື່ອໄດ້ວາງຫລັກເກນການແຕ່ງ ແລະການລຽນລໍາດັບໄວ້ແລ້ວ ຈຶ່ງມອບໃຫ້ ມະຫາສີລາ ວີຣະວົງສ໌ ເຊິ່ງເປັນກັມມະການວັນນະຄະດີ ແລະຫົວໜ້າຫ້ອງການວັນນະຄະດີດ້ວຍ ເປັນຜູ້ທ້ອນໂຮມຄໍາ ຈັດວິທີລຽນລໍາດັບຄໍາໄວ້ເປັນໝວດໆ ແລ້ວສເນີ ຕໍ່ຄນະກັມມະການ ໃຫ້ປະຊຸມພິຈາຣະນາແກ້ໄຂໃນການປະຊຸມທຸກເທື່ອ ແຕ່ວ່າເນື່ອງຈາກ ກັມມະການຫລາຍທ່ານ ມີພາລະໜ້າທີ່ຢ່າງອື່ນໆມາກຫລາຍທັງພາຍໃນປະເທດແລະນອກປະເທດ ເປັນເຫດບໍ່ໃຫ້ເຂົ້າປະຊຸມໄດ້ຕາມປົກກະຕິ ເມື່ອເປັນດັ່ງນີ້ ການຈັດແຕ່ງວັຈນານຸກົມອັນເປັນໜັງສືສໍາຄັນ ແລະໃຫຍ່ຍິ່ງ ກໍຈະເປັນການຫລ້າຊ້າເສັຽເວລາ ບໍ່ທັນກັບຄວາມຕ້ອງການແລະຄວາມຈໍາເປັນໃນເວລານີ້ ດັ່ງນັ້ນ ກັມມະການຈຶ່ງໄດ້ມອບໝາຍໃຫ້ ມະຫາສີລາ ວີຣະວົງສ໌ ຈັດທໍາໄປ ພ້ອມກັບໃຫ້ແຕ່ງໄວຍາກອນລາວ ພາກ 2 ຄື ວະຈີວິພາກ ພາກ 3 ວາກຍະສັມພັນ ແລະພາກ 4 ຄື ສັນທະລັກສນະ

ໃຫ້ສຳເຣັດບໍຣະບວນ ເພື່ອໃຫ້ໃຊ້ເປັນຫລັກໃນການຮຽນໄວຍາກອນລາວໄປຊົ່ວຄາວກ່ອນ ບັດນີ້ ມະຫາສິລາ ວີຣະວົງສ໌ ໄດ້ທ້ອນໂຮມຄຳສັບ ຈັດທຳເປັນໜັງສືວັຈນານຸກົມ ຕັ້ງແຕ່ ກ. ເຖິງ ຮ. ພ້ອມໜັງສືໄວຍາກອນລາວອີກ 3 ພາກ ຄື ວະຈີວິພາກ ວາກຍະສັມພັນ ແລະ ສັນທະລັກສນະ ຂຶ້ນສຳເຣັດບໍຣະບວນແລ້ວ ຄນະກັມມະການຈຶ່ງໄດ້ເຂົ້າປະຊຸມກັນ ຄັ້ງວັນທີ 13 ກຸມພາ 1961 ນີ້ ເພື່ອພິຈາຣະນາຮັບຮອງເອົາໜັງສືດັ່ງກ່າວນີ້ ແລ້ວໃຫ້ທາງຣາຊການກະຊວງສຶກສາ ພິມແຜ່ ຜາຍໄດ້.

ໜັງສືວັຈນານຸກົມນີ້ກໍດີ ໜັງສືໄວຍາກອນລາວທັງ 4 ພາກ ທີ່ໄດ້ພິມອອກໃນຄາວນີ້ກໍດີ ຄນະກັມມະການເຊື່ອແນ່ວ່າ ຍັງມີບ່ອນຜິດພາດຂາດເຂີນຢູ່ເປັນອັນມາກຍິ່ງໜັກໜາ ເພາະ ເປັນການຊຳຣະສະສາງຄັ້ງແຣກ ແຕ່ເຖິງດັ່ງນັ້ນ ຄນະກັມມະການກໍຫລິງເຫັນວ່າ ຄົງເປັນປໂຍດ ອັນຍິ່ງໃຫຽ່ແກ່ການສຶກສາຄົ້ນຄວ້າຕໍ່ໄປ ຈຶ່ງໄດ້ພິມອອກແຜ່ຜາຍ ເພື່ອໃຫ້ທ່ານຜູ້ຮູ້ທັງຫລາຍ ໄດ້ ຊ່ອຍກັນພິຈາຣະນາແກ້ໃຫ້ບໍຣິບູນຂຶ້ນ ຄນະກັມມະການມີຄວາມຍິນດີສເມີໃນຄວາມຕຸກເຕືອນຂອງ ທ່ານຜູ້ຮູ້ ແລະຜູ້ສົນໃຈ ໃນການຈະແກ້ໄຂໜັງສືວັຈນານຸກົມລາວ ແລະໄວຍາກອນລາວນີ້ ໃຫ້ຖືກ ຕ້ອງ ແລະບໍຣິບູນໃນພາຍພາກໜ້າ.

ທ້າຍສຸດນີ້ ຄນະກັມມະການ ຂໍຂອບຄຸນທ່ານ ມະຫາສິລາ ວີຣະວົງສ໌ ກັມມະການວັນນະ ຄະດີ ແລະຫົວໜ້າຫ້ອງການວັນນະຄະດີ ຜູ້ໄດ້ພາກພຽນພຍາຍາມຈັດທຳໜັງສືວັຈນານຸກົມ ລາວ ແລະໄວຍາກອນລາວນີ້ຂຶ້ນຈົນເປັນຜົນສຳເຣັດ ອັນເປັນຄຸນປໂຍດແກ່ປະເທດຊາດບ້ານເມືອງ ຢ່າງສຳຄັນຍິ່ງ ນອກນີ້ ຄນະກັມມະການຂໍຂອບຄຸນ ທ່ານ ມາບິດ ຊຸມສາຍ ຜູ້ຊຳນານການ ສຶກສາ ແຫ່ງ ຢູເນສໂກ ປະຈຳຣາຊອານາຈັກລາວ ທີ່ໄດ້ຊ່ອຍຈັດການພິມໜັງສືເຫລົ່ານີ້ ໃຫ້ເປັນ ຜົນສຳເຣັດດ້ວຍ.

ຄນະກັມມະການ

| | |
|---|---|
| ພນະທ່ານ ກຸ ອະໄພ | ປະທານກັມມະການກິດຕິມະສັກ |
| ພນະທ່ານ ຜຸຍ ປັນຍາ | ຮອງປະທານກັມມະການກິດຕິມະສັກ |
| ທ່ານ ສົມຈິນ ປີແອ ງິນ | ປະທານກັມມະການຈັດການປະຈຳປີ |

| | |
|---|---|
| ພນະທ່ານ ບົງ ສຸວັນນະວົງ | ຮອງປະທານກັມມະການຈັດການປະຈຳປີ |
| ພນະທ່ານ ຫຊຸຍ ອະໄພ | ກັມມະການ |
| ທ່ານ ມະຫາ ສີລາ ວີຣະວົງສ໌ | ກັມມະການ ເລຂານຸການ |
| ທ່ານ ໄຕແກ້ວ ຫລວງໂຄດ | ກັມມະການ |
| ທ່ານ ຄູນ ພິລາວັນ | ກັມມະການ |
| ທ່ານ ເກື່ອງ ປະທຸມຊາດ | ກັມມະການ |
| ທ່ານ ສຸພັນ ບລັງຊາເດີລາບຣົສ | ກັມມະການ |
| ທ່ານ ຫນູທັກ ສິດທິມໍຣະດາ | ກັມມະການ |
| ທ່ານ ພູວົງ ພິມມະສອນ | ກັມມະການ |
| ທ່ານ ເກນ | ກັມມະການ |
| ທ່ານມະຫາ ພູມີ ຈິຕພົງ | ກັມມະການ |

ວຽງຈັນ ວັນທີ 13 ກຸມພາ ພ.ສ. 2503

ປະທານກັມມະການວັນນະຄະດີ

*ສົມຈິນ ປີແອ ງິນ*

# ຄຳອະທິບາຍຫລັກການໃຊ້ວັຈນານຸກົມ

## ກ. ລຽນລຳດັບຄຳ

1. ພຍັນຊນະລຽນໄວ້ຕາມລຳດັບຕົວອັກສອນ ຄື: ກ ຂ ຄ ງ ຈ ສ ຊ ຍ ດ ຕ ຖ ທ ນ ບ ປ ຜ ຝ ພ ຟ ມ ຢ ຣ ລ ວ ຫ ອ ຮ

2. ສຣະທີ່ປະສົມກັບພຍັນຊນະ ກໍຂຽນໄວ້ຕາມລຳດັບສຣະ ແລະສຽງ ດັ່ງນີ້ : xະ xາ xິ xີ xຶ xື xຸ xູ ເxະ ເx ແxະ ແx ໂxະ ໂx ເxາະ xໍ ເxິ ເxີ ເxັຽ ເxຽ ເxຶອ ເxືອ xົວະ xົວ ໄx ໃx ເxົາ xໍາ

3. ຄຳຂຶ້ນຕົ້ນ ຫລື ພຍາງຕົ້ນຂອງຄຳ ທີ່ບໍ່ມີຕົວສະກົດ ຂຽນໄວ້ກ່ອນຄຳທີ່ມີຕົວສະກົດ ແລະຂຽນໄວ້ຕາມ ລຳດັບໃນ ຂໍ້ 2 ພຍາງຫລັງຂອງຄຳ ກໍລຳດັບ ໄວ້ດັ່ງດຽວກັບພຍາງຕົ້ນ ດັ່ງ ກະ ກະກຸທະພັນ ກະກຸນ ກະເກນ ເປັນຕົ້ນ

4. ຄຳທີ່ມີຕົວສະກົດ ຫລື ພຍາງທີ່ມີຕົວສະກົດນັ້ນ ຕົວສະກົດລຽນໄປຕາມລຳດັບພຍັນຊນະ ທີ່ໃຊ້ເປັນຕົວສະກົດໄດ້ ເຊິ່ງຢູ່ກ່ອນ ແລະລຸນດັ່ງນີ້ : ກ ຂ ຄ ງ ຈ ສ ຊ ຍ ຕ ຖ ທ ນ ບ ປ ພ ຟ ມ ຣ ລ ວ (ພຍັນຊນະ ເຫລົ່ານີ້ ໃຊ້ເປັນຕົວສະກົດໄດ້) ແລະຂຽນໄປຕາມລຳດັບດັ່ງດຽວກັນ ຕົວສະກົດຕົວໃດກໍລຳດັບໄປຈົນສຸດສຣະ ຕັ້ງແຕ່ xັ (ສຣະ xະ ) ໄປຈົນເຖິງ xົວ (ວ) ເວັ້ນແຕ່ ໄx ໃx ເxົາ xໍາ ເຊິ່ງໃຊ້ສະກົດບໍ່ໄດ້ ດັ່ງນີ້ : ກັກ ກາກ ກິກ ກີກ ກຸກ ໆລໆ ກວກ ໆ

5. ຄຳຈຳພວກອັກສອນນຳ ຄືອັກສອນຈູງ ອັກສອນຄວບ ອັກສອນສົມ (ເຊິ່ງແມ່ນພຍັນຊນະສອງຕົວ ອາສັຍຢູ່ນຳສຣະດຽວກັນ) ໄດ້ຂຽນໄວ້ສຸດທ້າຍຄຳອັກສອນປ່ຽວ ແລະລຽນໄປຕາມລຳດັບເດີມ ດັ່ງ: ກວ່າ ກວ້າ ໄກວ ກວັກ ກວາກ ກວາງ ກວາດ ກວ້ານ ດັ່ງນີ້ ລຳດັບໄດ້ຕໍ່ຈາກຄຳ ກວກ ຄຳອັກສອນສົມ ທີ່ສົມດ້ວຍ ອັກສອນ ຫ ດັ່ງ ເຫງົາ ຫຽ້າ ຫມາ ເຫລົ່ານີ້ ລຽນໄວ້ຕໍ່ລຳດັບຕົວ ຫ ດັ່ງດຽວກັນ

6. ຄຳປະເພດທີ່ຈະກ່າວຕໍ່ໄປນີ້ ເປັນຄຳທີ່ໃຊ້ໃນກາບກອນ ຄື:

ກ. ຄຳທີ່ຕື່ມ ອາ ອິ ໂອ ອິນ ຂ້າງທ້າຍ ດັ່ງ ກາຍາ ກາໂຍ ກາຍິ ກາຍິນ ໆ

ຂ. ຄຳທີ່ຕື່ມ ເ×ດ ຂ້າງທ້າຍ ດັ່ງ ນະລະເຣດ ພູເບດ ເທເວດ ໆ

ຄ. ຄຳທີ່ຕື່ມ ອາກາບ ຂ້າງທ້າຍ ເຊັ່ນ ທັສນາກາບ ຈິນຕະນາກາບ ຄະມະນາກາບ ໆລໆ

ງ. ຄຳທີ່ຕື່ມ ຊາດ ຂ້າງທ້າຍ ເຊັ່ນ ປະທຸມຊາດ ບຸບຜາຊາດ ສຸຄັນທະຊາດ ໆລໆ

ຄຳຈຳພວກທີ່ກ່າວນີ້ ມີຄວາມໝາຍບໍ່ຕ່າງຈາກຄວາມເດີມ ໄດ້ທ້ອນໂຮມໄວ້ໃນ ວັຈນານຸກົມ ນີ້ແລ້ວ ແຕ່ອາດບໍ່ຄົບຖ້ວນ ດັ່ງນັ້ນ ຖ້າຊອກບໍ່ເຫັນໃນຮູບ ຫລື ໝວດຄຳນັ້ນໆ ກໍໃຫ້ຊອກເບິ່ງຄຳເດີມ ດັ່ງ ກາໂຍ ກາຍາ ໃຫ້ເບິ່ງໃນຄຳ ກາຍ ຄຳກາຍ ມີຄວາມໝາຍແນວໃດ ຄຳ ກາໂຍ ກາຍາ ກໍມີຄວາມໝາຍຢ່າງດຽວກັນ.

ຈ. ຄຳທີ່ເປັນນາມຍ່ອຍ ບໍ່ໄດ້ລຽນໂຮມໄວ້ກັບສາມັນນາມ ດັ່ງເວົ້າກັນ ໄດ້ຂຽນຄຳສາມັນນາມ ດັ່ງ ນົກ ປາ ໝາກ ຫຍ້າ ໄວ້ບ່ອນນຶ່ງຕາມລຳດັບພຍັນຊນະ ສ່ວນນາມຍ່ອຍ ດັ່ງ ເຂົາ ແຂກ ດຸກ ຄໍ່ ຜ້າວ ຕານ ມ່ວງ ຄາ ແຝກ ໄດ້ຂຽນໄວ້ບ່ອນນຶ່ງຕ່າງຫາກ ຕາມລຳດັບພຍັນຊນະດຽວກັນ ເວັ້ນແຕ່ ລາງຄຳທີ່ແຍກກັນບໍ່ໄດ້ ເພາະເປັນຊື່ສິ່ງນັ້ນທັງໝົດ ເຊັ່ນ: ໝາກໝັ້ນ ໝາກຍືນ ໝາກເບັງ

ສ. ຄຳສັບທີ່ມີເຄົ້າມູນອັນດຽວກັນ ແຕ່ໃຊ້ແຍກໄປໄດ້ຫລາຍຢ່າງ ດັ່ງ ທີມວັນ ທີມວານ ທີມພານ ໄດ້ແປໄວ້ ແຕ່ສັບເດີມ ສ່ວນຄຳແຍກໄປບໍ່ໄດ້ແປ ແຕ່ບອກໃຫ້ເບິ່ງຄຳແປໃນສັບເດີມໆ

ຊ. ຄຳທີ່ຂຽນຢ່າງດຽວກັນ ແຕ່ມີຄວາມໝາຍໄດ້ຫລາຍຢ່າງ ດັ່ງຄຳວ່າ ບາດ ໄດ້ຂຽນ ເລກ ກຳກັບໄວ້ ວ່າ ບາດ 1. ບາດ 2. ບາດ 3. ແລ້ວອະທິບາຍຄວາມໝາຍຂອງຄຳນັ້ນໆໄວ້

## ຂ. ບອກສຽງອ່ານ

1. ຄຳທີ່ໃຊ້ສະກົດທັມມະດາ ຄື ກ ງ ຍ ດ ນ ບ ມ ວ ບໍ່ບອກສຽງອ່ານ
2. ຄຳທີ່ໃຊ້ຕົວສະກົດພິເສດ ຄື : ຂ ຄ ( ແທນ ກ) ຈ ສ ຊ ຕ ຖ ທ (ແທນ ດ) ປ ຟ (ແທນ ບ)

ຣ ລ (ແທນ ນ) ໄດ້ບອກສຽງອ່ານໄວ້ພ້ອມ

3. ຄຳອັກສອນຈູງ ຄືຄຳທີ່ມີອັກສອນຕ່ຳ 7 ຕົວ ນີ້: ງ ຍ ນ ມ ບ ຣ ລ ວ ຕົວໃດ ຕົວນຶ່ງ ນຳຫລັງອັກສອນສູງ ຫລື ກາງ ດັ່ງ ຜຍາ ສງັດ ສເນີ ສມອນ ສເວີຍ ສລາດ ກໍດີ ຄຳທີ່ອັກສອນຕ່ຳຈູງອັກສອນຕ່ຳ ດັ່ງ ວິທຍາ ພຍາບາດ ພຍັນຊນະ ກໍດີ ໄດ້ບອກສຽງອ່ານໄວ້ນຳ

## ຄ. ປວັດຂອງຄຳ

1. ຄຳທີ່ສັນນິຖານຮູ້ວ່າ ໄດ້ມາແຕ່ພາສາອື່ນ ໄດ້ບອກຊື່ພາສານັ້ນ ໄວ້ທາງທ້າຍຄຳ ອະທິບາຍດ້ວຍອັກສອນໃນວົງເລັບ ດັ່ງ (ປ.) ຫມາຍຄວາມວ່າ ປາລີ (ສ.) ຫມາຍຄວາມວ່າ ສັນສະກຣິດ ເປັນຕົ້ນ ແລະ ຖ້າຕົວອັກສອນລາວ ພໍຂຽນທຽບກັບຮູບເດີມຂອງພາສາເຂົາໄດ້ ກໍຂຽນຮູບເດີມຂອງພາສານັ້ນໆໄວ້ນຳ ດັ່ງ ປ. ມນຸສສ ເປັນຕົ້ນ

2. ຄຳລາວແທ້ ແລະຄຳທີ່ບໍ່ຮູ້ແນ່ວ່າ ມາແຕ່ພາສາໃດ ບໍ່ໄດ້ບອກທີ່ມາໄວ້ນຳ

3. ຫນັງສືວັນນະຄະດີ ທີ່ອ້າງເຖິງ ໄດ້ບອກໄວ້ດ້ວຍ

## ງ. ອັກສອນຫຍໍ້ ທີ່ໃຊ້ໃນວັຈນານຸກົມ

1. ອັກສອນຫຍໍ້ທີ່ໃຊ້ໃນວົງເລັບ ບອກທີ່ມາຂອງຄຳ ດັ່ງນີ້ :

(ວ.) : ຫວຽດນາມ (ຂ.) : ຂເມນ (ຈ.): ຈີນ (ສ.) : ສັນສະກຣິດ (ຊ.): ຊວາ

(ທ.) : ໄທ (ອ.) : ອັງກລິດ (ຝ.): ຝຣັ່ງ (ຮ.) : ຮິນດູ

2. ອັກສອນຫຍໍ້ ຢູ່ນອກວົງເລັບ ບອກປະເພດຂອງຄຳ ຕາມຫລັກໄວຍາກອນ ຄື :

ກ : ກິຣິຍາ

ສ. : ສັພນາມ(ຄຳແທນຊື່)

ສັ : ສັນທານ (ຄຳຕໍ່)

ນ. : ນາມ(ຄຳຊື່)

ຄ. : ຄຸນນາມ (ບອກລັກສະນະນາມຂອງຄຳ)

ບ. : ບຸພະບົດ (ຄຳນຳຫນ້າ)

ວ. : ວິເສດ (ຄຸນສັບ ຫລື ກິຣິຍາວິເສດ)

ອຸ. : ອຸທານ (ຄຳອອກສຽງ)

# ກ - ກະຈ່າງ

**ກ** ພຍັນຊນະຕົວທີ 1 ເປັນພວກອັກສອນກາງ ແລະໃຊ້ເປັນຕົວສະກົດໃນແມ່ກັກ.

**ກະ 1** ກ. ປະມານ, ກໍານົດ, ຫມາຍ, ຄະເນ. **2** ເປັນພຍາງຫນ້າຂອງຄໍາ ທີ່ຂຶ້ນຕົ້ນດ້ວຍ ກະ ດັ່ງ ກະຈາ, ກະແຈ, ກະຈອນ, ກະແສ, ກະຊະ, ກະດານ, ກະແຕ, ກະຮອກ ໆລໆ ເປັນຕົ້ນ. **3** ນ. ເປັນຊື່ຮຽກ ຜີປອບທີ່ແກ່ກ້າ ເຂົ້າຄົນແລ້ວບໍ່ອອກປາກ ຮຽກວ່າ ຜີກະ (ຕາມຄວາມເຂົ້າໃຈຂອງຄົນບູຮານ)

**ກະກາ** ນ. ເປັນຄໍາຮຽກ ຣະບຽບການປະສົມອັກສອນ ອັນເປັນບົດຮຽນຂັ້ນຕົ້ນຕາມແບບບູຮານ ຄື ການປະສົມອັກສອນ ທີ່ມີແຕ່ພຍັນຊນະ ກັບ ສຣະປະສົມ ຍັງບໍ່ທັນມີຕົວສະກົດ ຮຽກວ່າ ແມ່ ກະກາ ຫລື ກໍກາ.

**ກະກຸທະພັນ** ນ. ເຄື່ອງປະດັບຍົດຂອງເຈົ້າແຜ່ນດິນ ຕາມອັດຕິຍະຣາຊປະເພນີ ມີ 5 ຢ່າງຄື: 1. ມຸງກຸດ 2. ພຣະຂັນ 3. ໄມ້ເທົ້າ 4. ແສ້ຈາມອນ 5. ສຸວັນນະປາທຸກາ(ເກີບຄໍາ) ອີກຢ່າງນຶ່ງ ຄື 1. ພຣະຂັນ 2. ມຸງກຸດ 3. ເສຕສັດ 4. ສຸວັນນະປາ ທຸກາ 5. ແສ້ຈາມອນ (ປ. ກກຸທພັນທ).ໃນຫນັງສືບູຮານ ເອີ້ນວ່າ ກຸກກຸທ້າ ດັ່ງຄໍາກອນວ່າ: ກຸກກຸທ້າ ຂອງພຣະຍາຕັ້ງແຕ່ເກົ່າ ພີ່ກໍມອບໃຫ້ນ້ອງພຣະອົງອ້ອນຄູ່ກັນ.

**ກະກຸສັນໂທ** ນ. ນາມພຣະພຸດທະເຈົ້າ ອົງທີ1 ໃນຈໍານວນຫ້າພຣະອົງ ທີ່ມີໃນພັທກັບນີ້ (ປ.)

**ກະກຸສົນ** (ຄໍາດຽວກັບ ກະກຸສັນໂທ)

**ກະກຸນ** ນ. ເຊື້ອສາຍ,ໂຄດວົງ: "ສັດຖາໄທ້ທົງກະກຸນເຫນົ້າຫນໍ່ ສອງອ່ອນນ້ອຍ ທານໃຫ້ແກ່ພາມ" (ທ້າວຮຸ່ງ ທ້າວເຈືອງ) (ປ.)

**ກະເກນ** ກ. ບັງຄັບ (ເບິ່ງ ເກນ ອີກ)

**ກະຈະ** ວ. ຂາວງາມ, ແຈ້ງ, ສະອາດ, ເສາະໃສ.

**ກະຈາ** ວ. ກະເທີນ, ຜ້ານກາງ, ບໍ່ອອນ ບໍ່ແກ່: "ຂຸນກະຈານີ້ ພໍ່ນາດີກວ່າ ພໍ່ນາເອື້ອມອີ່ມເຂົ້າຂຸນກະຈາ ເອື້ອມ ອີ່ມລົມ" (ປູ່ສອນຫລານ)

**ກະແຈະ 1** ນ. ແປ້ງຫອມ, ຝຸ່ນຈັນຫອມ. **2** ນ. ຊື່ແຂວງນຶ່ງ ໃນປະເທດຂເມນ ຢູ່ຕໍ່ແດນປະເທດລາວ ແຂວງຈໍາປາສັກ.

**ກະແຈ** ນ. ເຄື່ອງໃສ່ຝັກຕູ, ຕູ້, ຫີບ ເປັນຕົ້ນ ເພື່ອໃຫ້ໄຂບໍ່ໄດ້ ທໍາດ້ວຍໂລຫະ ຫລື ໄມ້ ມີໄລເກາະທາງໃນ ແລະມີລູກສໍາລັບໄຂ (ປ. ກຸນຈິກາ)

**ກະແຈດານ** ນ. ກະແຈໄມ້ແບບບູຮານ ຝັກ ແລະໄລ ຕິດຢູ່ກັບຝາຝັກຕູດ້ານໃນ (ດັ່ງດຽວກັບກະແຈຕູ້ ທຸກວັນນີ້)

**ກະແຈມື** ນ. ກະແຈເປັນວົງມົນໆ ສໍາລັບໃສ່ຄໍ່ມືຜູ່ກະທໍາຜິດ.

**ກະເຈາະກະຈອກ** ວ. ອາການສະແດງຄວາມຍິນດີ ໃນເວລາເວົ້າ ຫລື ທໍາ ດັ່ງຄໍາກອນ:

"ຍາມເມື່ອ ຊິລຫານ້ໍາ ໄຫລນອງຖ້ວມທົ່ງ
ມິດບໍ່ມີບ່ອນຊຸ້ນ ປາກັ້ງອະເທີ່ຍຫົວ
ຍາມເມື່ອ ຊິລຫາແຫ້ງ ວັງຫນອງເຂີນຂາດ
ມິດງາມມັນກະເຈາະກະຈອກເວົ້າ ຫົວລໍ້ຕໍ່ປາ"

(ກອນບູຮານ)

**ກະເຈິກະເຈີກ - ກະເຈັຽກະຈຽກ - ກະຈົວະກະຈວກ** (ເບິ່ງ ກະເຈາະກະຈອກ)

**ກະຈົກ** ນ. ແກ້ວເປັນແຜ່ນ, ແວ່ນ (ສໍາລັບແຍງເບິ່ງເງົາ)

**ກະໂຈກ** (ເບິ່ງ ໂຈກ)

**ກະຈອກ** ນ. ນົກຈອກ, ວ. ບ່ອນເປັນຈອກຫລອກ, ພົກະເທີນ.

**ກະຈັງ** ນ. ລາຍຂຽນ ຫລື ລາຍສານຮູບ 4 ລ່ຽມທັກເຂົ້າໃນ (ເອີ້ນ ລາຍກະຈັງ)

**ກະຈ່າງ** ວ. ແຈ້ງ, ສວ່າງ.

# ກະຈາຍ - ກະແສ

**ກະຈາຍ 1** ນ. ໄມ້ພຸ່ມແບບນຶ່ງ ລຳແລະກ້ານມີໜາມ ໜ່ວຍກິນ ໃຊ້ທຳສີດຳໄດ້ ໃບເປັນແຫລບ, ຊື່ຫວ້ານ ແບບນຶ່ງ ຖືວ່າເປັນຫວ້ານມີພິດແຮງ.

**2** ກ. ຢາຍ, ຊະ, ແຈກອອກ.

**ກະຈັດ** ວ. ຖີ່, ແຈບ ມີລະຍະບໍ່ຫ່າງ.

**ກະຈັດກະຈາຍ** ວ. ຊະຊາຍອອກຢ່າງບໍ່ເປັນຣະບຽບ.

**ກະຈັ້ນ** ວ.ຈ້ໍ, ສັ້ນ,ຈັ້ນ.

**ກະຈົ້ນ** ນ. ສັດສີ່ຕີນແບບນຶ່ງ ຈຳພວກໄຕ່ໄມ້ ຕົວນ້ອຍຂນາດກະແຕ ໜ້າແຫລມ.

**ກະຈົນ** ນ. ຊື່ປາເກັດແບບນຶ່ງ ຕົວກົມຄືປາຄໍ່ ເກັດສີມຸມ ຫົວນ້ອຍ.

**ກະຈອນ** ນ. ເຄື່ອງປະດັບຫູຢ່າງນຶ່ງ ຂາຍາວແລະງໍ ທຳດ້ວຍເງິນຫລືຄຳ; ຊື່ດອກໄມ້ແບບນຶ່ງ ດອກ ແລະ ກ້ານຄື ກະຈອນໃສ່ຫູ.

**ກະຈອນຍອຍ** ນ. ກະຈອນແບບໃສ່ຫູ ທີ່ມີຍອຍຍ່ອນລົງ.

**ກະຈ້ອນ** ນ. ສັດສີ່ຕີນແບບນຶ່ງ ຈຳພວກໄຕ່ໄມ້ ຕົວຂນາດກະແຕ ອົບສີຮູຍ.

**ກະຈວນ** ນ. ແປ້ງ, ແປ້ງຫອມ, ວ. ມຸ່ນເປັນແປ້ງ, ລະອຽດ, ມຸ່ນ, ເປັນຝຸ່ນ.

**ກະຈາບ** ນ. ນົກຈາບ.

**ກະຈິບ** ນ. ນົກຈິບ.

**ກະຈອມປ້ອງ** ນ. ສຽມ: "ບາງກໍຖືກະຈອມປ້ອງອັນເປັນເຄື່ອງຕ້ອງຫົວມັນ" (ເວດສັນຕຣະ)

**ກະສາ** ນ. ນົກແບບນຶ່ງ ຈຳພວກກິນປາ ຕົວໃຫຍ່ຄໍຍາວ ອົບສີໝົ່ນ (ນົກຄໍກ້າກ ກໍວ່າ)

**ກະສິກັມ - ກະສິກຳ** ນ. ການເຮັດໄຮ່ໄຖນາ, ການປູກຫວ່ານແລະລ້ຽງສັດ.

**ກະສິການ** (ເບິ່ງ ກະສິກັມ) (ປ. ກສິກາຣ, ກສິກິຈຈ)

**ກະສິກິດ** (ເບິ່ງ ກະສິກັມ)

**ກະສິກອນ** ນ. ຜູ້ທຳການປູກຫວ່ານແລະລ້ຽງສັດ (ປ. ກສິກຣ)

**ກະສິຣະ - ກະສິລະ** ນ. ນ້ຳນົມ (ປ.)

**ກະສິຣະທາຣາ - ກະສິລະທາລາ** ນ. ສາຍນ້ຳນົມ, ອາການໄຫລອອກແຫ່ງນ້ຳນົມ (ປ.)

**ກະສີ** ນ. ຊື່ຜີຈຳພວກນຶ່ງ ໃນຈຳພວກຜີເປົ້າ (ຕາມຄວາມເຂົ້າໃຈ ຂອງຄົນບູຮານ)

**ກະເສຣາ - ກະເສລາ** ນ. ນ້ຳທິບ, ນ້ຳສັກສິດ: "ຜູມີຜາຍກະເສຣາ ຮວາດລົງມາລ້າງ" (ປ. ກສິຣ) ຄຳ ກສິຣ ຫລື ກະເສຣາ ນີ້ແປວ່າ ນ້ຳນົມ ແຕ່ເດີມໝາຍເອົານ້ຳນົມສມຸດ; ມີເຣື່ອງ ກ່າວໄວ້ ໃນຄັມພີປຸຣານະວ່າ ເມື່ອຕັ້ງໂລກຂຶ້ນໃໝ່ໆ ພວກເທວະດາພາກັນເຮັດນ້ຳທິບ ສເວີຍ ໂດຍເອົານາກກ້ຽວເອົາສເມນແລ້ວດຶງອື້ໄປອື້ມາ ໃຫ້ນ້ຳຢາຕ່າງໆ ໃນເຂົາສເມນນັ້ນ ໄຫລລົງໃຕ້ມະຫາສມຸດ, ນ້ຳຢາທີ່ໄຫລອອກຈາກເຂົາສເມນ ນັ້ນເອີ້ນວ່າ "ກສິຣສມຸທຣ" ແປວ່າ ນ້ຳນົມສມຸດ, ນ້ຳນົມສມຸດນີ້ ຜູ້ໃດໄດ້ກິນແລ້ວບໍ່ຕາຍ ເຫດນັ້ນຈຶ່ງເອີ້ນວ່າ ນ້ຳອະມະຕະ, ເທວະດາຜູ້ໃດໄດ້ກິນນ້ຳນີ້ແລ້ວ ກໍ່ເລີຍ ເອີ້ນວ່າ ອະມະຣະ ເຊິ່ງເຮົາອອກສຽງເປັນ ອະມອນ ແປວ່າ ຜູ້ບໍ່ຕາຍ.

**ກະແສ 1** ນ. ນ້ຳ, ແມ່ນ້ຳ, ທາງ ຫລື ສາຍ (ກະແສລົມ ສາຍລົມ), ທາງສຽງ, ສຽງເວົ້າ. (ຟັງກະແສສຽງເວົ້າ). **2** ນ. ຊື່ໜອງໃຫຍ່ແຫ່ງນຶ່ງຢູ່ໃນປະເທດຈີນ ເຊິ່ງທຸກວັນນີ້ ເອີ້ນວ່າ ຕາລີຟູ ລາວເຮົາ ເອີ້ນ ໜອງກະແສ ຫລື ໜອງກະແສແສນຍ່ານ: "ເລາະລຽບ ຈ້າຍ ໜອງໃຫຍ່ນີ້ ເປັນຖິ່ນຖານເດີມຂອງລາວ".

**3** ນ. ຜ້າແພຢ່າງບາງໆ (ເອີ້ນ ແພກະແສ)

# ກະສັງ - ກະຊ້າ

**ກະສໍ** ນ. ຊື່ຕົ້ນມ່ວງແນວນຶ່ງ ໜ່ວຍນ້ອຍ (ເອີ້ນຕົ້ນມ່ວງກະສໍ)

**ກະສັງ** ນ. ຊື່ຕົ້ນໄມ້ແນວນຶ່ງ ຄ້າຍຄືຕົ້ນຕູມ ໃບນ້ອຍມົນ ມີກິ່ນຂິວ ໝາກສຸກແລ້ວກິນໄດ້ (ໝາກຂວິດກໍວ່າ) ຊື່ຜັກ ແນວນຶ່ງ ໃບມົນ ກິ່ນຂິວ.

**ກະສິງ** ນ. ນາງຟ້ອນ, ນາງລະຄອນ, ການຟ້ອນລຳ. (ນາງກະສິງປະດັບ ແກວ່ງແຟນເຟືອຍຟ້ອນ) (ສິນໄຊ)

**ກະສັຍ - ກະໄສ - ກະສັຍການ - ກະໄສຍະການ** ນ. ການໝົດສ້ຽງ, ການສູນໄປ, ຊື່ພຍາດຝີໃນ ທ້ອງ ຫລື ປອດແຫ້ງ (ສ. ກສຍ) ນ. ເວລາສ້ຽງໂລກ, ເວລາສຸດ ແຫ່ງສິ່ງທັງປວງ (ສ. ກສັຍກາລ)

**ກະສັຍໂຣກ - ກະໄສຍະໂລກ** ນ. ຝີໃນທ້ອງ (ສ. ກະສັຍໂຣຄ)

**ກະສາຍ 1** ນ. ການຕິດຕໍ່, ການເປັນສື່, ຢາຕົ້ມ, ຢາປະສົມນ້ຳກິນ, ຣົດຝາດ. **2** ວ. ຫອມ, ແດງອ່ອນ. ເຫລືອງເຂັ້ມ (ສ. ກສາຍ)

**ກະສວຍ** (ເບິ່ງ ກ້ານສວຍ)

**ກະສັດ - ກະສັດຕາ** ນ. ພຣະເຈົ້າແຜ່ນດິນ (ປ. ຂັດຕິຍະ, ສ. ກສັຕຣິຍະ ໝາຍຄວາມວ່າ ຜູ້ປົກຄອງເຂດ) ນ. ເຈົ້າແຜ່ນດິນ, ກະສັດຕາທິຣາດ ນ. ພຣະເຈົ້າແຜ່ນດິນຜູ້ຍິ່ງໃຫຍ່. ກະສັດຕາໄທ້ ນ. ພຣະ ເຈົ້າແຜ່ນດິນຜູ້ປະເສີດ.

**ກະສັດຕີ** ນ. ນາງກະສັດ (ສ. ກະສັຕຣີ)

**ກະເສດ 1** ນ. ຜັກແນວນຶ່ງ ເກີດຢູ່ນ້ຳ ເປັນເຄືອມີປອດສີຂາວ ຕິດຢູ່ນຳເຄືອ. **2** ນ. ທົ່ງນາ, ທີ່ດິນ, ເຂດແດນ (ສ. ກເສຕຣ)

**ກະເສດກັມ - ກະເສດຕະກຳ** ນ. ການປູກຫວ່ານແລະການລ້ຽງສັດ; ນ. ການທຳໃຫ້ເກີດຜົນຈາກດິນ. (ສ. ກເສຕຣກັມມ)

**ກະເສດສາດ - ກະເສດຕະສາດ** ນ. ວິຊາກ່ຽວດ້ວຍກະເສດກັມ. (ສ. ກເສຕຣສາຕຣ)

**ກະສັນ** ກ. ຄະນຶງ, ຄຶດ, ຄຶດຢາກໄດ້, ມັກໃນທາງກາມາຣົມ.

**ກະສິນ** ນ. ຊື່ກັມມະຖານໝວດນຶ່ງ ທີ່ທຳການແອບເຝິກຫັດດ້ວຍການເລັງແລ ເພື່ອທຳຈິດໃຈໃຫ້ຕັ້ງໝັ້ນ ມີ 10 ປະການ ມີ ອາໂປກະສິນ ການເລັງແລເບິ່ງນ້ຳເປັນຕົ້ນ (ປ. ກສິນ)

**ກະສຸນ** ນ. ລູກປືນ (ກະຖຸນ ກໍວ່າ )

**ກະເສນ** ນ. ຊື່ໝາກມ່ວງແນວນຶ່ງ ໜ່ວຍໃຫຍ່

**ກະສຽນ 1** ກ. ຂຽນ, ຂຽນຄຳແປດ້ວຍຕົວໜັງສືນ້ອຍໆໄວ້ໃຕ້ສັບເດີມ. **2** ວ. ສ້ຽງໄປ, ໝົດໄປ (ສ. ກສິນ)

**ກະສຽນອາຍຸ** ນ. ຜູ້ມີອາຍຸເຖິງເຂດແລ້ວ (ສ. ກສີນາຍຸສ) (ຄຳນີ້ ບູຮານໝາຍເອົາຄົນຜູ້ມີອາຍຸພົ້ນກຳນົດເກນ ຄື ຜູ້ເຖິງຊະຣາແລ້ວ ເອີ້ນວ່າ ອາຍຸກະສຽນ ແຕ່ທຸກວັນນີ້ ໝາຍເອົາ ຜູ້ມີອາຍຸ ເຖິງ18 ປີ ແລ້ວຂຶ້ນໄປ)

**ກະສວນ** ນ. ສ່ວນ.

**ກະສາບ** ນ. ນ້ຳໜັກເງິນຕາທ່ກັບ 4 ບາດ (ສ. ກສາປນ): "ຮ້ອຍກະສາບໄດ້ ຍໍໃຫ້ແກ່ພາມ" (ເວດສັນດອນ)

**ກະສອບ** (ເບິ່ງ ສອບ)

**ກະເສມ** (ເບິ່ງ ກະເສີມ)

**ກະເສີມ** ນ. ຄວາມສຳຣານ, ຄວາມສນຸກສຸກສະບາຍ, ຄວາມຈະເຣີນ (ສ. ກເສມ; ປ. ເຂມ)

**ກະຊະ** ນ. ໄມ້ໄຜ່ປ່າແນວນຶ່ງ ມັກເກີດຕາມແຄມນ້ຳ.

**ກະຊ້າ** ນ. ພາຊນະ ສານດ້ວຍໄມ້ໄຜ່ ຫລື ຂອງອື່ນສຳລັບໃສ່ສິ່ງຂອງ:

"ຈວງຈັບຫລ້າງ ຂອງແພງທາງເທດ
ສັງຊິມາຄວ່າຫ້ອຍ ຫູກະຊ້າຫ່ຽວຂາຍ"
(ຄຳກອນບູຮານ)

**ກະແຊ 1** ນ. ຊື່ການຫລິ້ນແບບນຶ່ງ ຂອງພວກລາວເໜືອ. **2** ນ. ຊື່ພຍາດເຈັບທ້ອງແບບນຶ່ງ ມີອາ ການເຈັບສຽບ.

**ກະໂຊ້ 1** ນ. ເຄື່ອງໃຊ້ສານດ້ວຍໄມ້ໄຜ່ ມີ 2 ຢ່າງຄື: 1. ກະໂຊ້ສະນ້ຳ ຮູບຍາວ ມີດ້າມຈັບ 2. ກະໂຊ້ກວຽມ ສຳລັບປູພື້ນກວຽມ ເພື່ອຮອງສິ່ງຂອງ. **2** ນ. ຊື່ແມງແບບນຶ່ງ ຕົວນ້ອຍ ຢູ່ໃນນ້ຳ ຮູບຄືກະໂຊ້ສະນ້ຳ.

**ກະເຊີ** ນ. ເຄື່ອງສານດ້ວຍໄມ້ໄຜ່ ຮູບຄືກະບຸງ ແຕ່ ປາກກວ້າງ ກົ້ນຮອມ.

**ກະເຊົາ** ນ. ກະຊ້າ: "ສາຍກະເຊົາຫ້ອຍບ່າໄວ້ ກໍມາຊູດຫລູດຕົກເສັຽ" (ເວດສັນດອນຊາດົກ)

**ກະເຊົ້າ** (ເບິ່ງ ກະເຊົາ)

**ກະຊັກ** ນ. ຊື່ພູໜ່ວຍນຶ່ງ ໃນແຂວງຫລວງພຣະບາງ ເຊິ່ງລາວເທິງພວກນຶ່ງອາໄສຢູ່ເທິງພູນີ້ ເອີ້ນວ່າ ພູກະຊັກ.

**ກະຊາກ** ກ. ດຶງມາໂດຍແຮງ, ຊາກມາ.

**ກະຊັງ** ກ. ຟ້າວຕື່ນ ໃນຂະນະທີ່ກຳລັງຝັນ: "ຣາຕີອ້ອນ ເລີຍກະຊັງສະດຸ້ງຕື່ນ"

**ກະແຊງ** ນ. ຊື່ເຮືອໃຫຍ່ທີ່ມີແປ້ນບອງອ້າງ ສຳລັບ ຍ່າງຖໍ່ ເອີ້ນວ່າ ເຮືອກະແຊງ.

**ກະຊວງ** ນ. ສະຖານທີ່ທຳຣາຊການຂອງຣັຖບານ ອັນເປັນບ່ອນໂຮມກິຈການ ຂອງປະເທດ ສ່ວນນຶ່ງໆ ເຊິ່ງມີຫົວໜ້າ ເປັນຣັຖມຸນຕີ.

**ກະຊາຍ** ນ. ຜັກແບບນຶ່ງ ຈຳພວກຫວ້ານ ມີກິ່ນຫອມ ຫົວແລະຮາກໃຊ້ເປັນອາຫານໄດ້.

**ກະຊອນ 1** ນ. ເຄື່ອງສຳລັບຕັກອາຫານ ສານດ້ວຍ ລວດ ຫລື ໄມ້ໄຜ່ ກໍມີ ມີດ້າມສຳລັບຈັບຕັກ. (ຕ່ອງຊອນ ກໍວ່າ ຫລື ກະຕ່ອງຊອນ ກໍເອີ້ນ) **2** ນ. ແມງແບບ ນຶ່ງຫມົ້ນຢູ່ຕາມດິນ ຕົວນ້ອຍໆ ທີ່ຂາໜ້າມີກ້າມໃຫຍ່ ສຳລັບໃຊ້ ເປີກທາງ (ແມງຊອນ ຫລື ຈີ່ຊອນ ກໍເອີ້ນ)

**ກະຊິບ - ກະຊິບກະຊາບ** ກ. ເວົ້າຄ່ອຍໆໃກ້ຫູ, ສໍ່າ ຫລື ສິ່ມໃສ່ຫູ. ວ. ອາການເວົ້າຄ່ອຍໆ ແລະຟ້າວ.

**ກະຊາມ** ວ. ກະເທີນ, ເຖິງຍາມ: "ເດືອນສິບສອງມາຮອດແລ້ວ ຜ່າກະຊາມໄຂ້ສັ່ນ ປີນີ້ເດືອນຍີ່ມາແລ່ນຮ້ອນ ເດືອນຫ້າຕ່າວໜາວ" (ຄຳກອນບູຮານ)

**ກະຍ່າ** ນ. ຜັກແບບນຶ່ງ ກິ່ນຂິວ ໃບສ້ອຍ ຕາມກ້ານ ແລະຕົ້ນ ມີໜາມ (ກ້ານຍ່າ ຫລື ກ້ານຫຽ້າ ກໍເອີ້ນ)

**ກະຍາຫານ** ນ. ເຄື່ອງກິນ, ອາຫານ (ຂ.)

**ກະຍູງ** ນ. ໄມ້ແບບນຶ່ງ ແກ່ນສີດຳແດງ ເປັນໄມ້ຢ່າງ ດີທີ່ນຶ່ງ (ໄມ້ຍູງ ກໍວ່າ)

**ກະແຍງ 1** ນ. ຊື່ປາແບບນຶ່ງ ຕົວນ້ອຍ ມີງ່ຽງຢູ່ ແຄມຫູ ແລະ ສັນຫລັງ. **2** ນ. ຊື່ຜັກແບບນຶ່ງ ກິ່ນຂິວ ເກີດຕາມໄຮ່ນາ ໃນລະດູຝົນ.

**ກະແຍງໂຄ** ນ. ປາກະແຍງແບບຕົວໃຫຍ່.

**ກະໂຍມ** ນ. ຄົນຊາວບ້ານ (ເປັນຄຳພຣະພິກຂຸ ເອີ້ນ ຊາວບ້ານ)

**ກະຍອມ** ນ. ໄມ້ແບບນຶ່ງແກ່ນແຂງຄືໄມ້ແຄນ ດອກ ເປັນພົ້ວສີຂາວ ກິ່ນຫອມ ເປັນດອກໃນລະດູເດືອນສາມ ເດືອນສີ່.

**ກະເຍີມ** ວ. ຕາມແຕ່ຈະເປັນ.

**ກະດີ** ນ. ເຮືອນຂອງພິກຂຸ (ປ. ກຸຕິ)

**ກະດໍ 1** ນ. ອະວັຍວະເພດຂອງຄົນຊາຍ ແລະ ສັດຕົວ ຜູ້. **2** ນ. ເດືອຍທີ່ຕັ້ງຊັນຂຶ້ນ ສຳລັບມີແນວສຸບໃສ່.

**ກະດໍ້** ວ. ໂພດ, ເຫລືອ.

# ກະໄດ - ກະດັບ

**ກະໄດ** (ເບິ່ງ ຂັ້ນໄດ)

**ກະໄດແຫ** (ເບິ່ງ ສາຍກະໄດ)

**ກະໄດລີງ** ນ. ໄມ້ເຄືອແນວນຶ່ງ ເຄືອບິດໄປບິດມາ ດອກນ້ອຍສີຂາວ ແລະເປັນຊໍ່.

**ກະເດົາ** ນ. ໄມ້ແນວນຶ່ງ ເປືອກແລະໃບ ມີຣົດຂົມ ຝາດ ໃບອ່ອນແລະດອກ ໃຊ້ເປັນອາຫານໄດ້.

**ກະດາກ** ນ. ລະອາຍໃຈ,ຈຽມໃຈ.

**ກະດິກ** ກ. ເຮັດອະວັຍວະບ່ອນໃດບ່ອນນຶ່ງ ມີມື ເປັນຕົ້ນ ໃຫ້ເໜັງໄວໆ.

**ກະດຶກກະດຶນ** ກ. ສະແດງກິຣິຍາເໜັງຕີງໄວໆ ໃຫ້ ຜາກິດ ດ້ວຍຄວາມດີໃຈ.

**ກະດູກ** ນ.ໂຄງຮ່າງກາຍຂອງຄົນແລະສັດ ທີ່ເປັນ ສ່ວນແຂງ (ດູກ ກໍວ່າ)

**ກະໂດກ** (ເບິ່ງ ໂກນໂດກ)

**ກະດ່າງກະດາວ** ວ. ມີສີຂາວແລະດຳສັບປົນກັນ ບໍ່ ສເມີກັນ, ມີສີບໍ່ສເມີກັນ.

**ກະດ້າງ** **1** ວ. ແຂງ, ອັດແຂງ. ບໍ່ອ່ອນນ້ອມ (ໃຊ້ສຳ ລັບ ຂອງ ທີ່ເຄີຍອ່ອນແລ້ວກັບແຂງ) **2** ນ. ຊື່ ເຫັດ ທີ່ເກີດຕາມຂອນ ແລະຖືກແດດຈົນແຫ້ງ (ເອີ້ນວ່າ ເຫັດກະດ້າງ)

**ກະດິງ** **1** ນ. ເຄື່ອງຊຸ່ນໃຫ້ມີສຽງດັງ ເພື່ອສັນຍານ ໃຫ້ໄດ້ຍິນ ເຮັດດ້ວຍໂລຫະ ມີລູກຟັດຢູ່ທາງໃນສຳລັບ ແຂວນຄໍສັດ ຫລື ແຂວນຕາມໂຮງສິມ ເປັນຕົ້ນ. **2** ນ. ຊື່ແມ່ນ້ຳສາຍນຶ່ງ ເປັນສາຂາ ຂອງນ້ຳຂອງ ໄຫລ ຕົກໃສ່ນ້ຳຂອງທີ່ໃຕ້ເມືອງປາກຊັນ ໃນແຂວງ ວຽງຈັນ, **3** ນ. ຊື່ພູເຂົາໜ່ວຍນຶ່ງ ຢູ່ໃນເຂດແຂວງ (ຈັງຫວັດ) ເລີຍ ປະເທດໄທ. **4** ນ. ຊື່ໄມ້ເຄືອແນວນຶ່ງ ໃບແລະເຄືອ ຄືດອກຂີກ ໜ່ວຍປ້ອມ ມີລາຍແຊກ ໜ່ວຍອ່ອນ ຕົ້ມກິນໄດ້. **5** ນ. ຊື່ລົມໝູ່ນຶ່ງ ເອີ້ນ ລົມກະດິງ (ຕາມ ເຣື່ອງ ລັຊນາມ)

**ກະດິງທ້າວ** ນ. ກະດິງທີ່ທຳດ້ວຍທອງທ້າວ: "ທໍ່ຊໍ່ຟ້າ ກະດິງທ້າວທີ່ງແຂວນ" (ສິນໄຊ)

**ກະດຸ້ງ** (ເບິ່ງ ສະດຸ້ງ)

**ກະແດ້ງ** ວ. ທ່ຽວແຫ້ງ, ແຫ້ງ: " ຂາກະທວຍແຫ້ງ ອັນກະແດ້ງດ້ວຍແດດ ແລະແປວໄຟ" (ເວດສັນຕຣະ)

**ກະດົ້ງ** ນ. ພາຊນະ ສານດ້ວຍໄມ້ໄຜ່ ຮູບມົນແລະ ແບນ ສຳລັບໃສ່ຂອງຕ່າງໆ (ດົ້ງ ກໍວ່າ)

**ກະໂດງ** ນ. ເສົາສູງທີ່ຕັ້ງຢູ່ໃນເຮືອສຳເພົາ ສຳລັບຜູກ ແຜ່ນຜ້າ ເຮັດເປັນໃບໃຫ້ລົມພັດ ເພື່ອໃຫ້ ເຮືອແລ່ນໄປ ດ້ວຍກຳລັງລົມ.

**ກະດອງ** ນ. ດອງ, ດອງເຕົ່າ (ເບິ່ງ ດອງ ດ້ວຍ)

**ກະດຽງ** ນ. ຜັກແນວນຶ່ງ ເກີດຕາມໄຮ່ນາ ໃນລະດູ ຝົນ ໃບເປັນສ້ອຍອອກຈາກລຳ ແລະກ້ານ ມີຣົດຂົມ.

**ກະເດື່ອງ** ກ. ເດື່ອງ, ໜັກລົງຂ້າງນຶ່ງ, ຫວັ່ນໄຫວ, ທຳໃຫ້ເກີດຄວາມຕື່ນເຕັ້ນ (ກະເດື່ອງດິນ ດັງສະທ້ານ)

**ກະດາຍ** ວ. ເປັນຄຳຕໍ່ທ້າຍ ເພື່ອໃຫ້ປໂຍກຄຳເວົ້າທີ່ ຢູ່ໜ້າໜັກແໜ້ນ: "ເຫັນວ່າກະດາຍ"

**ກະດັດ** ວ. ໂພດ, ເຫລືອເກີນ. ກະດັດກະດໍ້, ໂພດເຫລືອ.

**ກະດາດ** ນ. ເຈັ້ຽ: <u>ກະດາດແກ້ວ</u> ນ. ເຈັ້ຽທີ່ເປັນແຜ່ນ ບາງໆ ແລະໃສ; <u>ກະດາດຊາຍ</u> ນ. ເຈັ້ຽ ສຳລັບຂັດ ຂອງໃຫ້ກ້ຽງ ທາງພື້ນມີຫີນ ຫລື ເມັດຊາຍຕິດຢູ່.

**ກະໂດດ** ກ. ເຕັ້ນ.

**ກະເດີດ** ນ. ປາແນວນຶ່ງ ມີເກັດ ຕົວນ້ອຍແຜບ ສອງ ຂ້າງມີເມັດສີດຳ.

**ກະດັບ** ນ. ຕົ້ນໄມ້ແນວນຶ່ງ ໃບນ້ອຍຍາວມີຣົດສົ້ມ ມັກເກີດຕາມແຄມນ້ຳ, ຊຸ້ນ ຫລື ບວນໝາກ ໄມ້ ທີ່ເປັນກ້ອນແຂງ. ວ. ເປັນກ້ອນແຂງ.

# ກະດັບຂາ - ກະຕ່າຫາງ

**ກະດັບຂາ** ນ. ພຍາດທີ່ເປັນກ້ອນແຂງ ຢູ່ແອບຂາ.

**ກະດັບງາ** ນ. ຕົ້ນໄມ້ແນວນຶ່ງ ດອກເປັນກາບສ້ອຍ ມີ 3 ກາບ ສີເຫລືອງ ກິ່ນຫອມ. ມີ 2 ແນວ ຄື: ກະດັບງາບ້ານ, ກະດັບງາປ່າ.

**ກະດານ** ນ. ແຜ່ນແປ້ນ, ແຜ່ນຫີນ, ແຜ່ນແປ້ນ ຫລື ຫີນ ສຳລັບໃຊ້ຂຽນຫນັງສື; ກະດານດຳ: ນ. ຫີນ ຫລື ແປ້ນ ເປັນສີດຳ ສຳລັບຂຽນຫນັງສື; ກະດານຫີນ ນ. ແຜ່ນຫີນ, ພະລານຫີນ, ກະດານຫົວ ນ. ດູກຫົວ: "ສອນສແວງມ້າງ ກະດານຫົວເຕັ້ນໄຕ່ " ( ສິນໄຊ)

**ກະດົ້ນ** (ເບິ່ງ ກະດຶກກະດົ້ນ)

**ກະເດັນ** (ເບິ່ງ ສະເດັນ)

**ກະດົ້ນ** ນ. ອະວັຍວະ ບ່ອນທາງຫລັງຂອງຫົວຕໍ່ຈາກ ຄໍຂຶ້ນໄປ (ງ່ອນດົ້ນ ກໍວ່າ)

**ກະໂດນ** ນ. ໄມ້ຈຳພວກນຶ່ງ ໃບ ແລະເປືອກມີຣົດຝາດ ໃບອ່ອນໃຊ້ເປັນອາຫານໄດ້ ມີສາມແນວຄື: 1. ກະໂດນ ໂຄກ ເປັນຕົ້ນໄມ້ໃຫຍ່ 2. ກະໂດນນ້ຳ ເປັນຕົ້ນໄມ້ ຂນາດນ້ອຍ ແລະມັກເກີດຕາມຫານ 3. ກະໂດນເບັ້ຽ ເປັນໄມ້ພຸ່ມ ມັກເກີດຕາມທົ່ງ.

**ກະດຶບໆ** ວ. ອາການດຶບໄປແຫ່ງແມງບົ້ງ ຫລື ປິງ.

**ກະດຶບໆ** (ດັ່ງດຽວກັນກັບ ກະດິບໆ ແຕ່ເປັນອາການ ຂອງຕົວໃຫຽ່)

**ກະດຸບໆ** (ເບິ່ງ ກະດຶບໆ)

**ກະເດບໆ** ວ. ອາການດຶບໄປ ຫລື ໂອບຂຶ້ນ ດັ່ງຄົນ ໂອບຂຶ້ນຕົ້ນໄມ້ເປັນຕົ້ນ.

**ກະແດບໆ** (ດັ່ງດຽວກັນກັບ ກະເດບໆ ແຕ່ເປັນອາ ການ ຂອງຕົວນ້ອຍ)

**ກະແດບເດົ້າ** ນ. ຊື່ນົກແນວນຶ່ງ ເປັນນົກຫາກິນຕາມ ແຄມນ້ຳ ຕົວນ້ອຍ ຂົນສີຫມົ່ນ ເວລາຢືນ ທຳອາການ ເດົ້າງັບໆ. ນົກກະແດບດິນ ກໍວ່າ: "ຈິບກ່າປ້ ເປັຽຝ້າຍ ກະແດບດິນ " (ສິນໄຊ)

**ກະດຶມ** ວ. ອາການທີ່ທຳໃຫ້ອຶບລຸກ ເພາະຂັ້ດຽດ.

**ກະດຸມ** ນ. ຫມາກຕຸ້ມໂສ້ງເສື້ອ ຫລື ກະເປົ໋າ (ດຸມ ກໍວ່າ)

**ກະດຸມພີ** ນ. ຄົນມີເງິນ (ປ. ກຸດຸມພີ)

**ກະດຸມພິດ** (ຄຳດຽວກັບ ກະດຸມພີ): "ເສດຖີພ້ອມ ພາມະນາກະດຸມພິດ" (ສິນໄຊ) (ປ. ກຸຕຸມພີ+ອິສ)

**ກະດອມ** ນ. ໄມ້ຈຳພວກນຶ່ງ ມີ ສາມແນວ ຄື: 1. ກະ ດອມຕົ້ນ ເປັນໄມ້ຂນາດກາງ ໃບສ້ອຍ ດອກເປັນພົ້ວ ສີຂາວ 2. ກະດອມພຸ່ມ ເປັນໄມ້ພຸ່ມ ດອກສີຂາວກິ່ນ ຫອມ 3. ກະດອມ ເຄືອ ດອກສີຂາວ ຫມາກເປັນລ່ຽມ ມີຣົດຂົມ.

**ກະດຽມ** ວ. ອາການທີ່ທຳໃຫ້ອຶບລຸກ, ອາການທີ່ພາ ໃຫ້ອາຍໃນໃຈ, ຫລື ອາການທີ່ທຳໃຫ້ຢາກຫົວ ເພາະ ຖືກຫນຶ່ງ.

**ກະເດ່ວ** ວ. ບາດຍ່າງ ທີ່ບໍ່ສເມີ ຂອງຄົນເຈັບຂາ ຫລື ຕີນ.

**ກະແດ່ວ** (ດັ່ງດຽວກັບ ກະເດ່ວ ແຕ່ເປັນອາການ ຂອງຜູ້ນ້ອຍ)

**ກະດຽວວ່າ** ກ. ຢຽວວ່າ, ຄຶດວ່າ, ເຂົ້າໃຈວ່າ.

**ກະຕະເວທີ** ນ. ການຮູ້ຈັກຄຸນທີ່ຄົນອື່ນທຳໃຫ້ແກ່ຕົນ, ການຕອບແທນຄຸນ (ປ.)

**ກະຕາທິການ** ນ. ບຸນອັນຍິ່ງໃຫຽ່ ທີ່ທຳໄວ້ (ປ. ກຕາທິກາຣ)

**ກະຕ່າ** ນ. ເຄື່ອງສານດ້ວຍຕອກ ຫລື ລວດ ຮູບກົມ ມີຮວງ ຫລື ສາຍສຳລັບໃສ່ສິ່ງຂອງ.

**ກະຕ່າກວຍ** ນ. ກະຕ່າທີ່ສານໄວ້ເປັນຕາຫ່າງໆ (ເບິ່ງ ກວຍ ອີກ)

**ກະຕ່າຫ່າງ** (ເບິ່ງ ກະຕ່າກວຍ)

**ກະຕິ** ນ. ກະດິ (ປ. ກຸຕິ)

**ກະແຕະ** ນ. ເຄື່ອງສານດ້ວຍໄມ້ໄຜ່, ສານລາຍອັດ ເປັນແຜ່ນ ສຳລັບຕາກຂອງ ຫລື ເຮັດຝາ (ຝາແຕະ ກໍວ່າ)

**ກະແຕ** ນ. ສັດສີ່ຕີນແນວນຶ່ງ ຈຳພວກໄຕ່ໄມ້ ຕົວ ຂນາດກະຮອກດຳ ຂົນທັງສອງຂ້າງມີສີຂາວເປັນແຊກ

**ກະແຕແຊ** ນ. ຝາອັດກະຕ່າສຳລັບໃສ່ປາ (ແຕແຊ ກໍວ່າ)

**ກະແຕລອດຂອນ** ນ. ຊື່ພຸ່ມໄມ້ແນວນຶ່ງ ມີຫົວໃຊ້ ເຮັດຢາ (ຫົວລ້ອນກະແຕ ກໍວ່າ)

**ກະແຕແຮ** (ເບິ່ງ ກະແຕແຊ)

**ກະຕໍ** (ເບິ່ງ ຕໍ)

**ກະຕໍ້** ນ. ເຄື່ອງຫລິ້ນຢ່າງນຶ່ງ ເຮັດດ້ວຍຫວາຍ ຫລື ຫນັງ ຮູບມົນ ສຳລັບເຕະ ຫລື ຕີບ.

**ກະເຕີ** ນ. ຝາແຕະ ເປັນຕາຫ່າງໆ ພໍຂອງນ້ອຍລອດ ລົງໄດ້ (ເອີ້ນວ່າ ຝາກະເຕີ ຫລື ຝາເຕີ). ຂີ້ເຫຍື້ອ ໄຫລ ມາເກາະກັນ ເປັນແຜ່ນຢູ່ບ່ອນນ້ຳເວີນ (ເອີ້ນຂີ້ກະເຕີ)

**ກະເຕີລອດຊ່ອງ** ນ. ຝາກະເຕີ ມີຮູບຄືເຝືອນ ສຳລັບ ໃສ່ເຂົ້າແປ້ງທີ່ກວນໃຫ້ລອດລົງເປັນກ້ອນນ້ອຍໆ.

**ກະໄຕ 1** ນ. ມີດແຊມ, ມີດຕັດຜົມ, ມີດສຳລັບຫນີບຜົມ ເປັນຕົ້ນ. **2** ນ. ດູກຄາງ, ຄາງ (ສ. ກຣໄຕ)

**ກະໄຕ້** ນ. ກະບອງ.

**ກະເຕົາ** ນ. ປາແຫ້ງທີ່ຕາກຫມົດທັງຂີ້ໂດຍບໍ່ຄົວ ສ່ວນຫລາຍແມ່ນ ປາຂາວ ປາແຕບ.

**ກະຕໍ່າ** ນ. ເຄື່ອງຫ້າງເອົາສັດປ່າ ເຮັດດ້ວຍໄມ້ເປັນ ທ່ອນຍາວ ມີສາຍໃຍພານ ເວລາສັດຢຽບ ຫລື ພານ ສາຍໄມ້ນັ້ນລັ່ນລົງເຕັງ.

**ກະຕັກ** ນ. ໄມ້ແສ້ມີເຫລັກຢູ່ປາຍ ສຳລັບແທງງົວໃຫ້ ເດີນໄວ (ຮຽກວ່າ ເຫລັກປະຕັກ ຫລື ເຫລັກກະຕັກ)

**ກະຕາກ** ກ. ສຽງໄກ່ຮ້ອງ ໃນເວລາມັນໄຂ່ ຫລື ຕື່ນ ຕົກໃຈ.

**ກະຕິກ** ນ. ພາຊນະ ສຳລັບໃສ່ນ້ຳເຢັນ ຫລື ນ້ຳຮ້ອນ ຮູບຕ່າງໆ (ຕິກ ກໍວ່າ)

**ກະຕຶກ** ນ. ຕົວພຍາດທີ່ປິ່ນຢູ່ກັບອຸດຈາຣະ ມີສອງ ແນວ ຄື: ກະຕຶກແປ ຕົວແພບ ແລະຍາວ; ກະຕຶກກົມ ຕົວກົມ ຄືຂີ້ກະເດືອນ.

**ກະໂຕກ** (ເບິ່ງ ໂຕກ)

**ກະຕ່ອງ** ນ. ເຄື່ອງສຳລັບຕັກເອົາຂອງ ສານດ້ວຍປໍ ປ່ານ ຫລື ໄມ້ ມີຄັນຈັບ.

**ກະຕັງກະຕິ້ວ** ນ. ຊື່ຕົ້ນໄມ້ແນວນຶ່ງ ມີຢາງ ແລະ ຢາງໃຊ້ເປັນປໂຍດໄດ້ຫລາຍຢ່າງ.

**ກະຕ່າຍ 1** ນ. ສັດສີ່ຕີນແນວນຶ່ງ ຫູຍາວ ເປັນສັດ ກິນຫຍ້າ ມີສອງປະເພດ ຄື: ກະຕ່າຍປ່າ ແລະກະ ຕ່າຍບ້ານ; ກະຕ່າຍຫມໍ້ ນ. ກະຕ່າຍແນວມີຂົນສີມຸມ ແລະ ຕົວໃຫຍ່. **2** ນ. ເຄື່ອງສຳລັບຂູດຫມາກພ້າວ.

**ກະຕ່ອຍ** ນ. ພູປ່າ, ພູແນວໃບຮີ ແລະກິ່ນຂິວ ເອີ້ນ ພູກະຕ່ອຍ.

**ກະຕັດ** (ເບິ່ງ ກະໄຕ)

**ກະຕາດ** ນ. ຝາສານລາຍອັດ (ຝາກະຕາດຕ້ອນ)

**ກະຕຸດ** ນ. ແຜ່ນເງິນ ຫລື ຄຳ ທີ່ຂຽນຄາຖາໃສ່ ນັບ ຖືວ່າ ເປັນເຄື່ອງແຄ້ວຂອງຄົງ, ເຄື່ອງແຄ້ວຄົງ.

**ກະຕັນຍູ** ນ. ຜູ້ຮູ້ຈັກຄຸນຂອງຜູ້ອື່ນ, ຜູ້ຕອບແທນຄຸນ ຜູ້ອື່ນ (ປ. ກຕັນຍູ)

**ກະເຕັນ** (ເບິ່ງ ເຕັນ)

**ກະໂຕ່ນ** (ເບິ່ງ ໂຕ່ນ)

**ກະຕາບໆ** ວ. ອາການຕົບຂຶ້ນລົງຈາກທີ່ສູງ.

**ກະຕິບ** ນ.ພາຊນະ ສານດ້ວຍຕອກໄມ້ ສຳລັບໃສ່ເຂົ້າ (ຕິບ ກໍວ່າ)

# ຂໍໂທດຫຼາຍໆ



ປຶ້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ